ກະຊວງໂຍທາທິການ ແລະ ຂົນສົ່ງ

# ຜົນການຈັດຕັ້ງປະຕິບັດວຽກງານໃນປີ 2017-2018 ແລະ ທິດທາງແຜນການ ປີ 2019-2020 ຂອງກະຊວງໂຍທາທິການ ແລະ ຂົນສົ່ງ

(ຕິດພັນກັບບົດສະຫຼຸບກາງສະໄໝ ແຜນພັດທະນາ 5 ປີ 2016-2020 ຂອງຂະແໜງການໂຍທາທິການ ແລະຂົນສົ່ງ)


ສະເໜີໂດຍ:

**ທ່ານ ແສງດາລິດ ກັດຕິຍະສັກ,**

ຫົວໜ້າກົມແຜນການ ແລະ ການຮ່ວມມື


**ກອງປະຊຸມວຽກງານໂຍທາທິການ ແລະ ຂົນສົ່ງ ປີ 2018**

ນະຄອນຫຼວງວຽງຈັນ, ຄັ້ງວັນທີ 28-29 ມິນາ 2019

# ເນື້ອໃນນຳສະເໜີ:



I. ຕີລາຄາການຜົນການປະຕິບັດວຽກງານ ປີ 2017-2018 ຂອງກະຊວງ ຍທຂ

1. ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ
2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ
3. ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ

※ ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການ ໄລຍະເຄິ່ງຕົ້ນສະໄໝ 2016-2018

II. ຕີລາຄາສາເຫດທີ່ພາໃຫ້ມີຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້

III. ທິດທາງແຜນການປີ 2019-2020

# ສະພາບລວມ:



- ໃນໄລຍະ 2 ປີຜ່ານມາ ກະຊວງ ຍທຂ ໄດ້ເອົາໃຈໃສ່ຜັນຂະຫຍາຍແນວທາງ ນະໂຍບາຍຂອງພັກທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງສູນກາງພັກ ກໍຄື ມະຕິຂອງກອງ ປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກກະຊວງ ຍທຂ;

- ໄດ້ເອົາໃຈໃສ່ປະຕິບັດວຽກ ເພື່ອສະໜັບສະໜູນການ ບັນລຸຄາດໝາຍ ທີ່ວາງໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII 2016-2020 ($8^{th}$ NSEDP) ແລະ ສູ້ຊົນ ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້ໃນແຜນພັດທະນາ 5 ປີ 2016-2020 ຂອງຂະແໜງການ ຍທຂ ກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງ, ການຄຸ້ມຄອງ ແລະ ການບໍລິການທາງດ້ານ ຍທຂ;

- ປະກອບສ່ວນ ໃນການພັດທະນາຕະໜ່າງ ຄົມມະນາຄົມ (ທາງບົກ, ອາກາດ, ທາງນ້ຳ, ທາງລົດໄຟ) ເພື່ອການເຊື່ອມຈອດ ພາຍໃນປະເທດ ແຕ່ເໜືອ ຫາ ໃຕ້, ຕາເວັນຕົກ ຫາ ຕາເວັນອອກ, ແລະ ເຊື່ອມໂຍງກັບບັນດາປະເທດອ້ອມຂ້າງ ຕາມທິດຫັນປະເທດຈາກ *ປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ* ເປັນ *ປະເທດເຊື່ອມຈອດກັບປະເທດອ້ອມຂ້າງ ແລະ ອະນຸພາກພື້ນ* ຢ່າງເປັນລະບົບຕາມວິໄສທັດຂອງຂະແໜງການ ທີ່ວ່າ "**ພັດທະນາ ຍທຂ ໃຫ້ເປັນປາຍແຫລມ, ມີຈຸດສຸມ, ປະສິດທິຜົນສູງ, ທັນສະໄໝ, ປອດໄພ, ເຊື່ອມໂຍງ-ເຊື່ອມຈອດ ແລະ ຍືນຍົງ**".

# I. ຕີລາຄາການຜົນການປະຕິບັດວຽກງານ ປີ 2017-2018 ຂອງກະຊວງ ຍທຂ

# 1. ວຽກງານຄຸ້ມຄອງມະຫາພາກ

## 1.1 ວຽກຈັດຕັ້ງ ແລະ ພະນັກງານ:

- ລັດຖະກອນທີ່ວຂະແໜງການ ຍທຂ ມີທັງໝົດ 3.702 ຄົນ (ຍິງ 796 ຄົນ) ສັງກັດຢູ່ກະຊວງ 1.000 ຄົນ (ຍິງ 292 ຄົນ), ສັງກັດຢູ່ພະແນກ ຍທຂ ແຂວງ ນະຄອນຫລວງວຽງຈັນ 1.543 ຄົນ (ຍິງ 355 ຄົນ), ຫ້ອງການ ຍທຂ ເມືອງ 1.159 ຄົນ (ຍິງ 149 ຄົນ).

- ກະຊວງ ຍທຂ ຍັງສືບຕໍ່ ຜັນຂະຫຍາຍໝາກຜົນຂອງບັ້ນດຳເນີນຊີວິດການເມືອງປັບປຸງປົວແປງທີ່ວພັກ ປີ 2017 ຕິດພັນກັບການປັບປຸງແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງຕົວຈິງ, ນັບທັງດ້ານເນື້ອໃນ ແລະ ແບບແຜນວິທີນຳພາ, ກົງຈັກ ແລະ ບຸກຄະລາກອນ.

- ສຳເລັດການປັບປຸງພາລະບົດບາດຂອງຫ້ອງການ, ບັນດາກົມ, ສະຖາບັນ, ກອງ ແລະ ພະແນກ ຍທຂ ແຂວງ, ຫ້ອງການ ຍທຂ ເມືອງ ທັງໝົດ 19 ພາກສ່ວນ; ໄດ້ສຳເລັດການຊັບຊ້ອນແຕ່ງຕັ້ງພະນັກງານຂັ້ນສູນກາງ ຈຳນວນ 37 ຕຳແໜ່ງ, ຂັ້ນແຂວງ 7 ຕຳແໜ່ງ, ຄະນະໂຄງການ 18 ຕຳແໜ່ງ;

# 1. ວຽກງານຄຸ້ມຄອງມະຫາພາກ

## 1.1 ວຽກຈັດຕັ້ງ ແລະ ພະນັກງານ:

– ຮອດປີ 2018 ລັດຖະກອນທົ່ວ ຂະແໜງການ ຍທຂ ມີທັງໝົດ 3.702 ຄົນ (ຍິງ 796 ຄົນ) ສັງກັດຢູ່ກະຊວງ 1.000 ຄົນ (ຍິງ 292 ຄົນ), ສັງກັດຢູ່ ພະແນກ ຍທຂ ຂັ້ນແຂວງ 1.543 ຄົນ (ຍິງ 355 ຄົນ), ຫ້ອງການ ຍທຂ ເມືອງ 1.159 ຄົນ (ຍິງ 149 ຄົນ).

※ ອັດຕາການເພີ່ມຂຶ້ນ ປີ 2017 ທຽບກັບປີ 2016 ຢູ່ໃນລະດັບ **2,44%**; ແລະ ປີ 2018 ທຽບປີ 2017 ແມ່ນ **0,38%**.




[*1] ບົດສະຫຼຸບປະຈຳປີ 2018 ຂອງກະຊວງ ຍທຂ ສະບັບເລກທີ 4675/ຍທຂ, ລົງວັນທີ 05/03/2019

[*2] ບົດສະຫຼຸບປະຈຳປີ 2017 ຂອງກະຊວງ ຍທຂ ສະບັບເລກທີ 4707/ຍທຂ, ລົງວັນທີ 05/03/2018

[*3] ບົດສະຫຼຸບປະຈຳປີ 2018 ຂອງກະຊວງ ຍທຂ ສະບັບເລກທີ 26143/ຍທຂ, ລົງວັນທີ 16/12/2016

# 1. ວຽກງານຄຸ້ມຄອງມະຫາພາກ



## 1.1 ວຽກຈັດຕັ້ງ ແລະ ພະນັກງານ: (ຕໍ່)

- ກະຊວງ ຍທຂ ຍັງສືບຕໍ່ ຜັນຂະຫຍາຍໝາກຜົນຂອງບັ້ນດຳເນີນຊີວິດການເມືອງປັບປຸງປີວແປງທົ່ວພັກ ປີ 2017 ຕິດພັນກັບການປັບປຸງແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງຕົວຈິງ, ນັບທັງດ້ານເນື້ອໃນ ແລະ ແບບແຜນວິທີນຳພາ, ກົງຈັກ ແລະ ບຸກຄະລາກອນ ຢ່າງເປັນລະບົບ ແລະ ມີບາດກ້າວຕັ້ງໜ້າ.

- ສຳເລັດການປັບປຸງພາລະບົດບາດຂອງຫ້ອງການ, ບັນດາກົມ, ສະຖາບັນ, ກອງ ແລະ ພະແນກ ຍທຂ ແຂວງ, ຫ້ອງການ ຍທຂ ເມືອງ ທັງໝົດ 19 ພາກສ່ວນ; ໄດ້ສຳເລັດການຊັບຊ້ອນແຕ່ງຕັ້ງພະນັກງານຂັ້ນສູນກາງ ຈຳນວນ 37 ຕຳແໜ່ງ, ຂັ້ນແຂວງ 7 ຕຳແໜ່ງ, ຄະນະໂຄງການ 18 ຕຳແໜ່ງ;

- ໄດ້ເອົາໃຈໃສ່ວຽກງານການເມືອງແນວຄິດ ໂດຍໄດ້ຈັດຕັ້ງການຄົ້ນຄວ້າເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ບັນດາມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍຂອງລັດ ໃຫ້ພະນັກງານ-ສະມາຊິກພັກ, ລັດຖະກອນ ເປັນປົກກະຕິ; ຈັດຕັ້ງເຊື່ອມຊຶມມະຕິກອງປະຊຸມຄົບຄະນະ ຄັ້ງທີ 5, 6 ແລະ 7 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ X;

# 1. ວຽກງານຄຸ້ມຄອງມະຫາພາກ



## 1.1 ວຽກຈັດຕັ້ງ ແລະ ພະນັກງານ: (ຕໍ່)

- ໄດ້ເອົາໃຈໃສ່ຍົກລະດັບບຸກຄະລາກອນ ຂອງຂະແໜງການ, ໃນ 2 ປີທີ່ຜ່ານມາ ໄດ້ນຳສົ່ງຝຶກອົບຮົມ ຢູ່ພາຍໃນ ຈຳນວນ 811 ເທື່ອຄົນ; ແລະ ໄດ້ສົ່ງພະນັກງານໄປປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ, ໄປວຽກທາງການ ຢູ່ຕ່າງປະເທດ 2.032 ເທື່ອຄົນ; ໄດ້ນຳສົ່ງໄປຍົກລະດັບໄລຍະຍາວ ຢູ່ພາຍໃນປະເທດ ຈຳນວນ 42 ຄົນ ແລະ ຢູ່ຕ່າງປະເທດ ຈຳນວນ 34 ຄົນ;

- ເອົາໃຈໃສ່ປະຕິບັດນະໂຍບາຍໃຫ້ພະນັກງານລັດຖະກອນ ຕາມລະບຽບການ; ໃນນັ້ນ ອອກຂໍ້ຕົກລົງໃຫ້ພະນັກງານ-ລັດຖະກອນອອກພັກຜ່ອນຮັບເບັ້ຍບຳນານ ຈຳນວນ 72 ທ່ານ.

# 1. ວຽກງານຄຸ້ມຄອງມະຫາພາກ

ຍທຂ PWT



## 1.2 ວຽກງານແຜນການ :

- ໄດ້ເອົາໃຈໃສ່ຄຸ້ມຄອງຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດ ແຜນການລົງທຶນຂອງລັດ ທີ່ໄດ້ຮັບອະນຸມັດ ໃນປີ 2017 ແລະ ປີ 2018 ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ຕາມທີ່ໄດ້ຮັບການແນະນໍາໃນດໍາລັດວ່າດ້ວຍການຈັດຕັ້ງ ປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ເງິນຕາ; ແລະ ບົດແນະນໍາກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈໍາແຕ່ລະປີ ໂດຍພື້ນຖານ. ສາມາດບັນລຸ ວິໃນແຜນການ-ການເງິນ ທຸກໂຄງການລົງທຶນຂອງລັດ ໄດ້ຮັບການປະເມີນ 100% ແລະ ບໍ່ມີໂຄງການນອກແຜນ.
- ໄດ້ທົບທວນຄືນ ຜົນການຈັດຕັ້ງປະຕິບັດ ແຜນພັດທະນາ 5 ປີ 2016-2020 ຂອງຂະແໜງການ ຍທຂ ກາງສະໄໝ ຕາມ 5 ແຜນງານ 44 ແຜນວຽກຈຸດສຸມ ທີ່ໄດ້ກໍານົດໄວ້. ຊຶ່ງວຽກນີ້ ກະຊວງ ຍທຂ ຖືເປັນວຽກສໍາຄັນບູລິມະສິດ ຈຶ່ງໄດ້ອະນຸມັດໃຫ້ນໍາໃຊ້ງົບປະມານໂຄງການ ຂະແໜງຂົວທາງ ໄລຍະ 2 (LRSP2) ເພື່ອຈ້າງຊ່ຽວຊານມາຊ່ວຍຕີລາຄາ ແລະ ພ້ອມທັງກະກຽມສ້າງແຜນພັດທະນາ 5 ປີ 2021-2025 ແລະ ສ້າງຄູ່ມືຄຸ້ມຄອງການລົງທຶນຂອງລັດ ຂອງຂະແໜງການ ຍທຂ ຄາດໝາຍສໍາເລັດ ຈະໃຫ້ສໍາເລັດໃນທ້າຍປີ 2020.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.2 ວຽກງານແຜນການ : (ຕໍ່)

- ໄດ້ເອົາໃຈໃສ່ປັບປຸງວຽກສະຖິຕິຂອງຂະແໜງການຢ່າງເປັນລະບົບ ສາມາດສຳເລັດຫລາຍໜ້າວຽກເຊັ່ນ: ສຳເລັດແຜນພັດທະນາລະບົບ ສະຖິຕິຂອງກະຊວງ ຍທຂ ໄລຍະ 2016-2020 ແລະ ເຜີຍແຜ່ໃຫ້ພາກສ່ວນກ່ຽວຂ້ອງເພື່ອຊາບ ແລະ ຈັດຕັ້ງປະຕິບັດ ແນ່ໃສ່ຮັບປະກັນໃຫ້ ວຽກງານສະຖິຕິ ມີຄວາມທັນສະໄໝ ສາມາດສະໜອງຂໍ້ມູນ ສະຖິຕິຮັບໃຊ້ໃຫ້ໜ້າທີ່ການເມືອງ ຂອງຂະແໜງການ ຍທຂ; ສາມາດສັງລວມໄດ້ວ່າຮອດປັດຈຸບັນທົ່ວປະເທດມີທັງໝົດ 8.505 ບ້ານ ມີທາງທັງໝົດ 18.131 ເສັ້ນ ລວມລວງຍາວຂອງທາງທັງໝົດ 62.409,8 ກມ ໃນນີ້ມີບ້ານທີ່ມີທາງທຽວໄດ້ 2 ລະດູແລ້ວ ຈຳນວນ 6.864 ບ້ານ ແລະ ຍັງທຽວໄດ້ແຕ່ລະດູດຽວ 2.310 ບ້ານ (ສະຖິຕິປີ 2018).

- ໄດ້ສຳເລັດການສ້າງລະບຽບການຄຸ້ມຄອງການຂໍອະນຸມັດດຳເນີນທຸລະກິດໃນຂະແໜງການ ຍທຂ ສະບັບເລກທີ 17582/ຍທຂ ລົງວັນທີ 8/8/2018 ແລະ ໄດ້ກະກຽມຄວາມພ້ອມດ້ານຈຸດປະສານງານ ແລະ ບຸກຄະລາກອນ ເພື່ອຈັດຕັ້ງປະຕິບັດການລົງທຶນປະຕູດຽວຂອງກະຊວງ ໃນວັນທີ 1/2/2019.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.3 ວຽກງານຮ່ວມມືສາກົນ :

- ໄດ້ຈັດກອງປະຊຸມລັດຖະມົນຕີຂົນສົ່ງ ລາວ-ຫວຽດນາມ ຊຶ່ງມີຈຸດປະສົງເພື່ອປຶກສາຫາລື ແລະ ແກ້ໄຂບັນຫາການອຳນວຍຄວາມສະດວກໃນການໄປມາຫາສູ່ ແລະ ການເຊື່ອມຈອດ, ເຊິ່ງໄດ້ ມີການລົງນາມ ຂໍ້ຕົກລົງຮ່ວມກັນ 4 ສະບັບ ໃນນັ້ນ ລວມມີ ຂໍ້ຕົກລົງລະຫວ່າງກະຊວງ ຍທຂ ແຫ່ງ ສປປ ລາວ ແລະ ກະຊວງ ຄົມມະນາຄົມ-ຂົນສົ່ງ ແຫ່ງ ສສ ຫວຽດນາມ ວ່າດ້ວຍການຮ່ວມມືລົງທຶນ, ຄຸ້ມຄອງ ແລະ ລົງທຶນ ທ່າເຮືອຫວຸງອ່າງ (ທ່າທຽບເຮືອ1, 2, ແລະ 3).

- ການຍາດແຍ່ງການສະໜັບສະໜູນ ຈາກລັດຖະບານຈີນ ພາຍໃຕ້ ຄະນະກຳມະທິການຮ່ວມມືລາວຈີນ ທີ່ ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າຄະນະລັດຖະບານຈີນ, ແຜນແມ່ບົດກ່ຽວກັບການຊຸກຍູ້ ການຮ່ວມມືກໍ່ສ້າງ “ ໜຶ່ງແລວທາງໜຶ່ງເສັ້ນທາງ ” ໃນວັນທີ 16/05/2017. ໃນນີ້ ໄດ້ສືບຕໍ່ເອົາໃຈໃສ່ກໍ່ສ້າງໂຄງການທາງລົດໄຟລາວ-ຈີນ ຊຶ່ງມີຄວາມຄືບໜ້າລື່ນແຜນການ;

# 1. ວຽກງານຄຸ້ມຄອງມະຫາພາກ

## 1.3 ວຽກງານຮ່ວມມືສາກົນ : (ຕໍ່)

- ການພົວພັນຮ່ວມມື ລາວ-ໄທ ໃນຂະແໜງ ຄົມມະນາຄົມ-ຂົນສົ່ງ ໄດ້ຮັບການເສີມຂະຫຍາຍຕົວສູງໃນຈັງຫວະທີ່ໄວ, ໂດຍສະເພາະການພັດທະນາພື້ນຖານໂຄງລ່າງຕາມແລວເສດຖະກິດ; ການຮ່ວມມື ກັບອົງການ NEDA ສໍາລັບດ້ານການກໍ່ສ້າງ ພື້ນຖານໂຄງລ່າງເປັນຕົ້ນ: ໂຄງການປັບປຸງເສັ້ນທາງຫຼວງແຫ່ງຊາດເລກທີ 11 ຕອນທາງແຕ່ຂົວນໍ້າສັງ-ຄົກເຂົ້າດໍ ແລະ ແຕ່ບ້ານໂນນສະຫວັນ-ຊະນະຄາມ (122,49 ກມ); ການສໍາຫຼວດອອກແບບຂົວມິດຕະພາບແຫ່ງທີ 5 ປາກຊັນ-ບຶງການ (ຈະລົງມືກໍ່ສ້າງໃນປີ 2019 ນີ້); ແລະ ອື່ນໆ.

- ການຮ່ວມມືລາວ-ຍີ່ປຸ່ນ ໃນຂະແໜງການ ຍທຂ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍ ຢ່າງຕັ້ງໜ້າ ໂດຍຜ່ານກອບການຮ່ວມມືສອງຝ່າຍ ແລະ ຫລາຍຝ່າຍ. ໝາກຜົນທີ່ເປັນສັນຍາລັກແຫ່ງສາຍພົວພັນມິດຕະພາບ ແລະ ຮ່ວມມື ທີ່ສໍາຄັນໃນປີ 2018 ແມ່ນຜົນສໍາເລັດຂອງໂຄງການກໍ່ສ້າງຂະຫຍາຍຕຶກອາຄານຜູ້ໂດຍສານສະໜາມບິນວັດໄຕ. ນອກຈາກນັ້ນ ຍັງໄດ້ສໍາເລັດບົດສໍາຫລວດ ແລະ ສຶກສາເບື້ອງຕົ້ນ ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂນ້ຍ, ສໍາເລັດໂຄງການກໍ່ສ້າງຂົວຂ້າມນໍ້າເຊກອງ ຕາມທາງເລກ 16 ເບ.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.3 ວຽກງານຮ່ວມມືສາກົນ : (ຕໍ່)

- ໄດ້ເອົາໃຈໃສ່ ການຂົນຂວາຍຍາດແຍ່ງທຶນຊ່ວຍເຫລືອລ້າ ແລະ ເງິນກູ້ດອກເບ້ຍຕໍ່າຈາກສະຖາບັນການເງິນ, ຊຶ່ງໃນໄລຍະ 2 ປີ ຜ່ານມາ ພວກເຮົາໄດ້ຕິດຕາມໂຄງການທີ່ໄດ້ຮັບ ການສະໜັບສະໜູນ ເຊັ່ນ: ສໍາລັບ ADB ປະກອບດ້ວຍ ໂຄງການກໍ່ສ້າງທາງເລກ 6A, 6B, ໂຄງການກໍ່ສ້າງລະບົບນໍ້າປະປາ ແລະ ສຸຂພິບານ 11 ຕົວເມືອງ, ໂຄງການຄຸ້ມຄອງ ແລະ ສ້ອມແປງຂະແໜງຂົວທາງ; ໂຄງການກໍ່ສ້າງທາງຊົນນະບົດ ໂດຍທຶນຂອງ ລັດຖະບານເຢຍລະມັນ ໂດຍຜ່ານອົງການ KFW; ຈາກທະນາຄານໂລກ(WB) ໂດຍສະເພາະໂຄງການປັບປຸງເສັ້ນທາງ ແລະ ບູລະນະສ້ອມແປງເສັ້ນທາງ ໃນກອບຂອງໂຄງການ LRSP2; ນອກຈາກນີ້ ຍັງມີການສົມທົບສະໜັບສະໜູນ ຈາກຄູ່ຮ່ວມພັດທະນາອື່ນໆ ເຊັ່ນ: ທະນາຄານ AIIB, NDF, EIB ອື່ນໆ

- ໄດ້ເຊັນບົດບັນທຶກ ກ່ຽວກັບການຈັດຕັ້ງປະຕິບັດ Early Harvest GMS CBTA Implementation ພ້ອມທັງໄດ້ເລີ່ມກະກຽມຄວາມພ້ອມດ້ານຕ່າງໆໃນການຈັດຕັ້ງປະຕິບັດ ນັບແຕ່ເດືອນ 9/2018 ທີ່ຜ່ານມາ.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.4 ວຽກງານການເງິນ

- ໄດ້ເອົາໃຈໃສ່ຊຸກຍູ້ຕິດຕາມຈັດຕັ້ງປະຕິບັດວິໄນການເງິນຢ່າງເຂັ້ມງວດ ເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ ລົງວັນທີ 16/12/2015, ສາລະບານວ່າດ້ວຍງົບປະມານ, ຂໍ້ການົດການໃຊ້ຈ່າຍ ແລະ ປະຕິບັດຕາມການແນະນຳຂອງອົງການກວດສອບແຫ່ງລັດ.

- ໄດ້ເອົາໃຈໃສ່ກວດນັບ ແລະ ຂຶ້ນບັນຊີຊັບສິນຢູ່ກະຊວງ ຍທຂ ເປັນຕົ້ນແມ່ນວຽກທີ່ດິນ ແລະ ສິ່ງປຸກສ້າງ, ພາຫະນະ ແລະ ອຸປະກອນເຄື່ອງໃຊ້ສານັກງານ, ອຸປະກອນຮັບໃຊ້ຫ້ອງການ. ນອກຈາກນີ້ ຍັງໄດ້ລົງກວດກາ-ກວດນັບ ແລະ ຂຶ້ນບັນຊີຊັບສິນຂອງລັດວິສາຫະກິດ ແລະ ບັນດາໂຄງການ ທີ່ຂຶ້ນກັບກະຊວງ ອີກຈຳນວນນຶ່ງ.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.4 ວຽກງານການເງິນ (ຕໍ່)

- ໄດ້ເອົາໃຈໃສ່ຕິດຕາມ ຊຸກຍູ້ການເກັບລາຍຮັບຂອງກະຊວງ ຍທຂ ຢ່າງຕັ້ງໜ້າ; ປີ 2017 ແມ່ນສາມາດເກັບລາຍຮັບໄດ້ທັງໝົດ (ລວມເອົາລາຍຮັບວິຊາການ, ລາຍຮັບກອງທຶນທາງ, ລາຍຮັບຄ່າບິນຜ່ານ) ຈຳນວນ 1.424,02 ຕື້ກີບ ເທົ່າກັບ 110,64% ຂອງແຜນການປີ; ແລະ ປີ 2018 ເກັບລາຍຮັບທັງໝົດໄດ້ 1.447,86 ຕື້ກີບ ເທົ່າກັບ 101,93% ຂອງແຜນການປີ;

- ການປະຕິບັດລາຍຈ່າຍງົບປະມານບໍລິຫານ: ໄດ້ຮັບອະນຸມັດຈ່າຍປະຈາປີ 2017 ຈຳນວນ 137,43 ຕື້ກີບ ປະຕິບັດລາຍຈ່າຍບໍລິຫານໄດ້ ຈຳນວນ 114,69 ຕື້ກີບ ເທົ່າກັບ 83,45% ຂອງແຜນການປີ; ສຳລັບປີ 2018 ໄດ້ຮັບອະນຸມັດ ທັງໝົດ 127,83 ຕື້ກີບ, ປະຕິບັດລາຍຈ່າຍຕົວຈິງ ໄດ້ 138,03 ຕື້ກີບ ເທົ່າກັບ 92% ຂອງແຜນການປີ.

# 1. ວຽກງານຄຸ້ມຄອງມະຫາພາກ

## 1.5 ວຽກງານກວດກາ

- ໄດ້ຈັດຕັ້ງເຄື່ອນໄຫວວຽກງານທີ່ພົ້ນເດັ່ນໃນ 2 ປີຜ່ານມາ ເປັນຕົ້ນ: ກວດກາຕາມຄໍາສັ່ງຂອງກະຊວງ ຍທຂ ແລະ ເຂົ້າຮ່ວມການຕິດຕາມກວດກາຕາມການຕົກລົງຂອງຂັ້ນສູນກາງຈໍານວນນຶ່ງ, ໄດ້ລົງຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ 2 ຄື: ໂຄງການກໍ່ສ້າງຂົວຂ້າມນໍ້າຂອງ ຫາດແກ້ວ-ກ້ອນຕື້ນ ເມືອງປາກທາແຂວງບໍ່ແກ້ວ ແລະ ໂຄງການກໍ່ສ້າງທາງແຕ່ຊໍາໃຕ້-ທ່າເຫຼົ່າ ແຂວງຫົວພັນ;
- ຕິດຕາມກວດກາຕາມຄໍາສັ່ງ ແລະ ຕາມແຜນການປົກກະຕິ ຈໍານວນ 8 ໂຄງການ ເປັນຕົ້ນແມ່ນ ກວດກາບໍລິການວຽກເພີ່ມ, ຮ່ວມເປັນຄະນະກວດກາສະເພາະກິດຂັ້ນສູນກາງກວດກາໂຄງການ ກໍ່ສ້າງທີ່ຊໍາລະດ້ວຍເງິນສົດແບບມີສ່ວນຫລຸດ 30% 70% ແລະ ດ້ວຍຮູບແບບພັນທະບັດ ແລະ ບັນດາໜ້າວຽກອື່ນໆທີ່ຕິດພັນ ກັບ ຂະແໜງການ ຍທຂ;
- ໄດ້ເຂົ້າຮ່ວມເປັນຄະນະ ເພື່ອຕິດຕາມກວດກາການປະຕິບັດບັນດາໂຄງການຕ່າງໆ ພ້ອມທັງລົງເຄື່ອນໄຫວກວດກາເປັນໄລຍະ ແລະ ປົກກະຕິ, ໄດ້ຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີຂອງ ບຸກຄົນ ແລະ ບໍລິສັດຕໍ່ກັບກະຊວງ ຍທຂ.
- ໄດ້ຕອບຄໍາຊັກຖາມສະພາແລະ ທາງສຽງສັງຄົມຢ່າງຕັ້ງຫນ້າເອົາໃຈໃສ່ ອັນໄດ້ສ້າງຄວາມເຂົ້າໃຈຂອງສັງຄົມ ຕໍ່ຂະແໜງການ ຍທຂ ຖືກຕ້ອງ ທ່ວງທັນເວລາດີຂຶ້ນ

# 1. ວຽກງານຄຸ້ມຄອງມະຫາພາກ

## 1.6 ວຽກງານນິຕິກຳ

ກະຊວງ ຍທຂ ໄດ້ເອົາໃຈໃສ່ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງມະຫາພາກ ຂອງຂະແໜງການ ໂດຍໄດ້ເອົາໃຈໃສ່ວຽກການສ້າງ ແລະ ປັບປຸງຕິນິກຳ ເພື່ອເປັນເຄື່ອງມື ໃນການຄຸ້ມຄອງມະຫາພາກ. ໃນໄລຍະ 2 ປີຜ່ານມາ ໄດ້ມີຜົນງານພົ້ນເດັ່ນ ເປັນຕົ້ນ:

- ສຳເລັດກົດໝາຍການບິນພົນລະເຮືອນ (ສະບັບປັບປຸງ) ສະບັບເລກທີ 53/ສພຊ ລົງວັນທີ 26/6/2018; ສຳເລັດກົດໝາຍວ່າດ້ວຍການລົດໄຟ ຜ່ານກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII;
- ສຳເລັດຮ່າງກົດລະບຽບຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງດ່ານສາກົນ (LIFFA);
- ສຳເລັດປື້ມຄູ່ມືອອກແບບທາງ ແລະ ກຳນົດໝາຍເຕັກນິກ;
- ສຳເລັດຮ່າງ ກຳນົດໝາຍລາຄາຫົວໜ່ວຍກໍ່ສ້າງ ແລະ ສ້ອມແປງຂົວທາງ ຂະແໜງ ຍທຂ (ສະບັບປັບປຸງ 2019);
- ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019 ວ່າດ້ວຍການຄຸ້ມຄອງການປຸກສ້າງ (ສະບັບປັບປຸງປີ 2019) ແລະ ການຄຸ້ມຄອງການອະນຸຍາດປຸກສ້າງປໍ້ານໍ້າມັນ ແລະ ອາຍແກັສ;
- ແລະ ອື່ນໆ ທີ່ເປັນນິຕິກຳໃຕ້ກົດໝາຍ ອີກຈຳນວນໜຶ່ງ.

# 1. ວຽກງານຄຸ້ມຄອງມະຫາພາກ



## 1.7 ດ້ານການຄົ້ນຄວ້າມາດຕະຖານເຕັກນິກ ແລະ ຝຶກອົບຮົມ

ໃນຊຸມປີຜ່ານມາ ກະຊວງ ຍທຂ ໄດ້ເອົາໃສ່ ວຽກງານດັ່ງກ່າວ ເປັນສຳຄັນ ໄດ້ຍົກລະດັບສູນຝຶກອົບຮົມ ຂຶ້ນເປັນສະຖາບັນ ແລະ ເພີ່ມພາລະບົດບາດສະຖາບັນທີ່ມີແລ້ວ ໃຫ້ຄົບຊຸດ ແລະ ສຸມໃສ່ວຽກງານຄົ້ນຄວ້າແລະ ພັດທະນາວິທະຍາສາດ ເປັນວຽກງານຈຸດສຸມໃຈກາງ:

- ຄົ້ນຄວ້າກຳນົດລາຄາຫົວໜ່ວຍໃນການສຳຫລວດ-ວາງແຜນຜັງເມືອງ,
- ລະບຽບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນຂະແໜງຂົວທາງ;
- ຄົ້ນຄວ້າຄູ່ມືການອອກແບບສະຖານທີ່ ຈອດລົດໃນຕົວເມືອງ; ຄົ້ນຄວ້າສຶກສາຄວາມເໝາະສົມການອອກແບບອົງປະກອບຂອງ ເສັ້ນທາງໃນຕົວເມືອງ;
- ວິເຄາະຊອກຫາມູນຄ່າບູລະນະຮັກສາ ເສັ້ນທາງຫຼວງແຫ່ງຊາດ ແລະ ຈັດລຽງບູລິມະສິດການສ້ອມແປງປະຈຳປີ 2017 ແລະ 2018, ສືບຕໍ່ປະຕິບັດ ໂຄງການປັບປຸງຂີດຄວາມສາມາດການບູລະນະຮັກສາເສັ້ນທາງໃນ ສປປ ລາວ, ປັບປຸງລະບົບ Road Maintenance System (RMS) ເກັບກຳ ແລະ ວິເຄາະຄວາມເປັນຄົ້ນຂອງເສັ້ນທາງ ProMMs;
- ໄດ້ປັບປຸງບັນດາຫລັກສູດ, ຕຳລາ ຂອງການຝຶກອົບຮົມທາງດ້ານເຕັກນິກເພີ່ມຈຳນວນນຶ່ງ ເພື່ອຮັບປະກັນຄຸນນະພາບ ແລະ ຮັບໃຊ້ວຽກງານຝຶກອົບຮົມໃຫ້ທັນກັບຄວາມຕ້ອງການ; ໄດ້ສຸມໃສ່ວຽກພັດທະນາຫລັກສູດຝຶກອົບຮົມໃໝ່ ໄດ້ສຳເລັດ 9 ຫລັກສູດ ແລະ ປັບປຸງຫລັກສູດທີ່ມີຢູ່ແລ້ວໃຫ້ແທດເໝາະກັບສະພາບຕົວຈິງ ໄດ້ສຳເລັດ 28 ຫລັກສູດ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.1 ວຽກງານຂົວທາງ:

### 1) ວຽກກໍ່ສ້າງ-ຍົກລະດັບເສັ້ນທາງ ແລະ ຂົວ:

- ສາມາດປະຕິບັດຫຼາຍໂຄງການທີ່ສໍາເລັດ 100% ເຊັ່ນ:
  - ໂຄງການກໍ່ສ້າງຂົວຂ້າມນໍ້າຂອງໂຄກເຂົ້າດໍ-ປາກລາຍ;
  - ໂຄງການກໍ່ສ້າງຂົວ 7 ແຫ່ງທາງເລກ 6A ສົບເບົາ-ບ້ານດ່ານ ຂ.ຫົວພັນ;
  - ໂຄງການກໍ່ສ້າງທາງເລກ 1A ບຸນເໜືອ-ລານຕຸຍ (ຜລ);
  - ໂຄງການກໍ່ສ້າງທາງເລກ 13 ເໜືອ ຕອນທາງ ເມືອງໄຊ-ປາກມອງ;
  - ໂຄງການກໍ່ສ້າງທາງບ້ານຮອກ-ເມືອງຄອບ-ປາກຄອບ-ຄອນຕື້ນ;
  - ໂຄງການກໍ່ສ້າງເສັ້ນທາງເມືອງຊຽງຮ່ອນ-ເມືອງຄອບ ໂຄງການກໍ່ສ້າງທາງບ້ານຮອກ-ເມືອງຄອບ-ປາກຄອບ-ຄອນຕື້ນ;
  - ໂຄງການກໍ່ສ້າງຂົວເຊກອງ; ໂຄງການປັບປຸງຂະຫຍາຍເສັ້ນທາງ ເລກທີ 21 ແຕ່ຜາເມືອງ ຫາ ທາງ 1 D ບ້ານທ່າສີ (ບຄຊ);
  - ໂຄງການກໍ່ສ້າງທາງ 16A ປາກຊ່ອງ-ຫລັກ 52 ແຂວງ ອັດຕະປື;
  - ໂຄງການກໍ່ສ້າງທາງເບີ 4 ແຕ່ພູຫົວຊ້າງ ຫາ ບ້ານອ່າວໃຕ້ ມ.ອານຸວົງ (ຊສບ); ແລະ
  - ໂຄງການກໍ່ສ້າງທາງ 16B ເຊກອງ-ດາກຈຶງ (ຊ່ວງ: 96,6 ກມ).

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ

## 2.1 ວຽກງານຂົວທາງ: (ຕໍ່)

### 1) ວຽກກໍ່ສ້າງ-ຍົກລະດັບເສັ້ນທາງ ແລະ ຂົວ:

- ໂຄງການທີ່ກໍາລັງສືບຕໍ່ຈັດຕັ້ງປະຕິບັດວຽກຢ່າງມີຄວາມຄືບໜ້າ ເຊັ່ນ:
  - ກໍ່ສ້າງທາງ ປູຢາງ 2 ຊັ້ນ ເສັ້ນທາງເລກ 6A+6B ທາງລ້ອງ-ສົບເບົາ-ປ່າຮ່າງ (ADB12): ສະເພາະທາງ 6B (100%), ທາງ 6A (98%) ແລະ ຊ່ວງວຽງໄຊ-ນໍ້າໂສຍ(53%);
  - ໂຄງການຄຸ້ມຄອງ ແລະ ສ້ອມແປງຂະແໜງຂົວທາງ (61,61%);
  - ໂຄງການກໍ່ສ້າງທາງ ແຕ່ສາມແຍກນາຊາງ ຫາ ທົ່ງທູ້ ແລະ ເທດສະບານເມືອງຊໍາໃຕ້ (98%);
  - ໂຄງການກໍ່ສ້າງທາງທ່າເຫຼົ້າ-ຊໍາໃຕ້, ປະຕິບັດໄດ້ 96,17%;
  - ໂຄງການກໍ່ສ້າງທາງ ຫົງສາ-ຊຽງແມນ ຊ່ວງ 1 (86%) ແລະ ຊ່ວງ 2 (91,58%);
  - ໂຄງການກໍ່ສ້າງຂົວ 2 ແຫ່ງຕາມທາງເລກ 9 ປະຕິບັດໄດ້ 75,13%;
  - ໂຄງການກໍ່ສ້າງທາງ 16B ດາກຈຶງ-ຫາວຽດນາມ (ຊ່ວງ: 21 ກມ) (81,47%); ແລະ ອື່ນໆ.
- ການຈັດຕັ້ງປະຕິບັດໂຄງການກໍ່ສ້າງຍົກລະດັບເສັ້ນທາງ 13 ເໜືອ (ເສັ້ນທາງ ຕອນທາງແຕ່ນະຄອນຫຼວງວຽງຈັນ ຫາ ໂພນໂຮງ ດ້ວຍຮູບແບບ OPBRC ທີ່ເປັນໂຄງການຕົວແບບຍືນຍົງ ຮູບແບບໃຫມ່ ຊຶ່ງການອອກແບບສັນຍາ ແມ່ນກວມເອົາການບູລະນະຮັກສາໄປພ້ອມ ໃນໄລຍະເວລາອາຍຸການໃຊ້ງານ 10 ປີ ພ້ອມທັງບັນຈຸປັດໃຈ ຄວາມຄົງທົນຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ; ເຊິ່ງໄດ້ຮັບການສົມທົບທຶນຈາກທະນາຄານໂລກ (WB) ແລະ ທະນາຄານພັດທະນາໂຄງລ່າງອາຊີ (AIIB).

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.1 ວຽກງານຂົວທາງ: (ຕໍ່)

### 2) ວຽກບູລະນະສ້ອມແປງທາງຫຼວງ:

- ເພື່ອຮັບປະກັນການຄົມມະນາຄົມຂົນສົ່ງໃຫ້ມີຄວາມສະດວກໂລ່ງລ່ຽນ ພວກເຮົາໄດ້ເອົາໃຈໃສ່ວຽກງານການສ້ອມແປງທາງຫຼວງ ໃນປີ 2017-2018 ກະຊວງ ຍທຂ ໄດ້ສຸມໃສ່ການບູລະນະສ້ອມແປງຕາຫນ່າງ ເສັ້ນທາງ ຫຼວງ ເພື່ອໃຫ້ສາມາດຮັບໃຊ້ການຂົນສົ່ງໃຫ້ມີຄວາມສະດວກ, ໂລ່ງລ່ຽນ;

- ໄດ້ສືບຕໍ່ ຈັດຕັ້ງປະຕິບັດໂຄງການບູລະນະຮັກສາ ທາງຫລວງ ເຊິ່ງໃນປີ 2017 ປະຕິບັດທັງໝົດ 25 ໂຄງການ ເຊິ່ງໄດ້ແບ່ງອອກເປັນ 126 ສັນຍາ ລວມມູນຄ່າປະມານ 581,77 ຕື້ກີບ; ປີ 2018 ວຽກສ້ອມແປງທາງຫຼວງແຫ່ງຊາດ (ແບບເປັນກຳນົດ) ໃນປີ 2018, ມີທັງໝົດ 130 ສັນຍາ, ຂຶ້ນກັບ 25 ໂຄງການ, ລວມມູນຄ່າ 596,99 ຕື້ກີບ, ກຳນົດເວລາໃນການຈັດຕັ້ງປະຕິບັດສັນຍາ 5 ເດືອນ, ຮອດທ້າຍເດືອນ ທັນວາ ສະເລ່ຍຄວາມຄືບໜ້າທັງໝົດໄດ້ 97,19%.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.2 ວຽກງານຂົນສົ່ງ:

- ໄດ້ເອົາໃຈໃສ່ ພັດທະນາ ລະບົບການຂົນສົ່ງ ໃຫ້ສາມາດ ຮັບປະກັນການຈໍລະຈອນ ສິນຄ້າ ແລະ ໂດຍສານ ໄດ້ທົ່ວເຖິງທົ່ວປະເທດເພື່ອຮັບໃຊ້ຊີວິດການ ເປັນຢູ່ຂອງ ປະຊາຊົນ ພ້ອມທັງ ພັດທະນາລະບົບການຂົນສົ່ງສາມາດເຊື່ອມຈອດກັນບັນດາ ປະເທດອ້ອມຂ້າງ ສິ່ງເສີມການຂົນສົ່ງສິນຄ້າ ແລະ ໂດຍສານລະຫວ່າງປະເທດ ໄດ້ ນັບມື້ນັບຫລາຍຂຶ້ນ;

- ສາຍທາງການ ແລ່ນລົດໂດຍສານ ລາວ-ໄທ ມີທັງໝົດ 16 ສາຍທາງ; ສາຍທາງການ ແລ່ນລົດໂດຍສານ ລາວ-ຈີນ ມີທັງໝົດ 17 ສາຍທາງ; ສາຍທາງການແລ່ນລົດ ໂດຍສານ ລາວ-ຫວຽດນາມ ໃນປີ 2017 ມີທັງໝົດ 39 ສາຍທາງ. ສາຍທາງການ ແລ່ນລົດໂດຍສານ ລາວ-ຫວຽດນາມ. ແລະ ສາຍທາງການແລ່ນລົດໂດຍສານ ລາວ-ກໍາປູເຈຍ ມີທັງໝົດ 2 ສາຍທາງ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.2 ວຽກງານຂົນສົ່ງ: (ຕໍ່)

– ໄດ້ນໍາໃຊ້ງົບປະມານຈາກບ້ວງກອງທຶນທາງ (ກອງທຶນຄວາມປອດໄພຕາມທ້ອງຖະໜົນ) ເພື່ອປະຕິບັດວຽກ ຄວາມປອດໄພທາງຫລວງ ໂດຍສະເພາະ ການໂຄສະນາ ແລະ ປູກຈິດສໍານຶກ ໃຫ້ຜູ້ໃຊ້ລົດໃຊ້ຖະໜົນ ໄດ້ມີສະຕິລະວັງຕົວໃນການຂັບຂີ່ ເພື່ອຫລຸດຜ່ອນອຸປະຕິເຫດຕາມເສັ້ນທາງ ແລະ ຫລຸດຜ່ອນຈໍານວນ ຜູ້ເສຍຊີວິດ ຈາກການເກີດອຸປະຕິເຫດຕາມທ້ອງຖະໜົນ.




*ຮູບທີ 14 ກຣາບປຽບທຽບການເກີດອຸບັດຕິເຫດທີ່ເກີດຂື້ນຕາມທົ່ນທາງ ປີ 2016 ແລະ 2017.*

*ສະຖິຕິ ຈໍານວນອຸບັດຕິເຫດ ເພີ່ມຈາກ ປີ 2016 ຈໍານວນ 5.616 ຄັ້ງ ເປັນ 5.868 ຄັ້ງ ໃນປີ 2018 ເພີ່ມຂຶ້ນປະມານ **4,49%***

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ

## 2.2 ວຽກງານຂົນສົ່ງ: (ຕໍ່)

- ໄດ້ສົມທົບກັບ ກົມຕຳຫລວດ ຈະລາຈອນ ກະຊວງ ປກສ, ກະຊວງສຶກສາ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຈັດງານສັບປະດາ ຄວາມປອດໄພທາງຖະໜົນ, ໄດ້ເຄື່ອນໄຫວ ລົງໂຄສະນາເຜີຍແຜ່ ກ່ຽວກັບກົດລະບຽບ ຈໍລະຈອນ ແລະ ການຂັບຂີ່ປອດໄພ ຢູ່ເຂດຊຸມຊົນຕາມເສັ້ນທາງຫລວງ ແຫ່ງຊາດ ໃນແຕ່ລະແຂວງ.
- ຄຽງຄູ່ກັບວຽກໂຄສະນາປະຊາສຳພັນປູກຈິດສຳນຶກ, ຍັງໄດ້ປັບປຸງຈຸດອັນຕະລາຍຂອງເສັ້ນທາງຫຼັກ ຈຳນວນໜຶ່ງ ຕະຫຼອດຮອດ ສ້ອມແປງ ແລະ ສ້າງໄຟອຳນາດ ຢູ່ບັນດາຈຸດທີ່ມີການສັນຈອນຫຍຸ້ງຍາກ ອີກຈຳນວນໜຶ່ງ.
- ໄດ້ເອົາໃຈໃສ່ ວຽກຄວບຄຸມ ການບັກທຸກເກີນກຳນົດ ໂດຍສືບຕໍ່ປະຕິບັດການຕິດຊັ່ງນ້ຳໜັກ ຢູ່ 13 ດ່ານສາກົນ ແລະ ສ້າງດ່ານຕິດຊັ່ງນ້ຳໜັກ 3 ຈຸດທົດລອງຕາມທາງຫລວງແຫ່ງຊາດ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ

## 2.3 ວຽກງານໂຍທາທິການທາງນ້ຳ:

- ໄດ້ເອົາໃຈໃສ່ປະຕິບັດບັນດາໂຄງການກໍ່ສ້າງຕະຝັ່ງເຈື່ອນ ທີ່ຕິດພັນກັບ ການປົກປັກຮັກສາເຂດນ້ຳແດນດິນ ແລະ ອະທິປະໄຕຂອງຊາດ;
- ໂຄງການກໍ່ສ້າງປ້ອງກັນ ຕາຝັ່ງເຈື່ອນສຳເລັດ ຫຼາຍໂຄງການ ເຊັ່ນ: ໂຄງການປ້ອງກັນຕະຝັ່ງເຈື່ອນ ບ.ຫ້ວຍຊາຍໃຕ້-ບ.ວຽງ ໃໝ່ ຂ.ບໍ່ແກ້ວ; ໂຄງການປ້ອງກັນຕະຝັ່ງເຈື່ອນ ບ.ແກ້ງສະດອກ (ບຄຊ); ກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ມ ທ່າໂທມ (ຊສບ); ກັນເຈື່ອນບ້ານສີພູມ ເມືອງຊະນະຄາມ (ວຈ); ກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ບ້ານໜາກຮຽວ ເມືອງປາກງື່ມ;
- ປະຕິບັດໂຄງການສືບຕໍ່ ອີກຈຳນວນໜຶ່ງ ຢ່າງຕັ້ງໜ້າ ເຊັ່ນ: ໂຄງການກໍ່ສ້າງກັນຕາຝັ່ງເຈື່ອນບ້ານດອນສະຫວັນ-ດ່ານຖິ່ນ ເມືອງຫ້ວຍຊາຍ ແຂວງບໍ່ແກ້ວ; ໂຄງການກໍ່ສ້າງກັນຕາຝັ່ງເຈື່ອນບ້ານຫ້ວຍຍາງຄຳ (70%); ໂຄງການກໍ່ສ້າງຕະຝັ່ງເຈື່ອນ ດອນສັງຄີ, ເມືອງປາກງື່ມ (ນວຈ), (73,87%); ໂຄງການຕ້ານໄພນ້ຳຖ້ວມ ແລະ ລະບາຍນ້ຳອອກຈາກເມືອງແປກ; ໂຄງການກໍ່ສ້າງຄັນຄູປ້ອງກັນນ້ຳຖ້ວມຕິດພັນກັບການກໍ່ສ້າງທາງ ເລກທີ 11 ນະຄອນຫລວງວຽງຈັນຕອນໃຕ້ (66%;) ໂຄງການຫລຸດຜ່ອນ ໄພນ້ຳຖ້ວມ ເມືອງໄຊ ແຂວງອຸດົມໄຊ; ແລະ ອື່ນໆ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.4 ວຽກງານການບິນພົນລະເຮືອນ:

- ວຽກງານປັບປຸງຍົກລະດັບ ແລະ ບູລະນະ ສະໜາມບິນ: ໄດ້ສຳເລັດການຂະຫຍາຍອາຄານສະໜາມບິນວັດໄຕ (ສາມາດຮອງຮັບຜູ້ໂດຍສານໄດ້ສູງສຸດ 3ລ້ານຄົນ/ປີ); ພວມປັບປຸງກໍ່ສ້າງສະໜາມບິນໜອງຄ້າງ ປະຕິບັດໄດ້ 43,86% ແລະ ກໍ່ສ້າງຍົກລະດັບສະໜາມບິນຫ້ວຍຊາຍ ປະຕິບັດໄດ້ 10,07%;

- ວຽກງານໂທລະຄົມການບິນ: ໄດ້ປະຕິບັດໂຄງການຕິດຕັ້ງ ແລະ ສ້ອມບາລຸງຮັກສາລະບົບວິທະຍຸການບິນ, ປັບປຸງລະບຽບການດ້ານມາດຕະຖານ ເຕັກນິກວິທະຍຸການບິນ ໃຫ້ສອດຄ່ອງກັບກັບແຜນພັດທະນາວຽກງານວິທະຍຸການບິນ ຂອງອົງການການບິນພົນລະເຮືອນ ຕາມການປ່ຽນແປງໃນແຕ່ລະໄລຍະ;

- ວຽກງານຈໍລະຈອນທາງອາກາດ: ໄດ້ສຳເລັດການສ້າງແລະປັບປຸງລະບຽບການ ທີ່ກ່ຽວຂ້ອງເຊັ່ນ: ລະບຽບການຄຸ້ມຄອງການຈໍລະຈອນທາງອາກາດ, ລະບຽບວ່າດ້ວຍການຄຸ້ມຄອງເຮືອບິນບໍ່ມີຄົນຂັບ, ສາເລັດການສ້າງເສັ້ນທາງບິນລະບົບພາທາງດ້ວຍດາວທຽມ ຮ່ວມກັບຫວຽດນາມ ແລະ ກຳປູເຈຍ;

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.4 ວຽກງານການບິນພົນລະເຮືອນ: (ຕໍ່)

- ວຽກຂົນສົ່ງທາງອາກາດ: ໄດ້ສຳເລັດການຂໍແລກປ່ຽນໜັງສືທາງການທູດເພື່ອຈັດຕັ້ງປະຕິບັດສັນຍາຈຳນວນ 2 ປະເທດ, ສຳເລັດການຂໍອະນຸມັດເຈລະຈາ ຈຳນວນ 3 ປະເທດ, ສຳເລັດການດັດແກ້ສັນຍາ ຈຳນວນ 2 ປະເທດ, ໄດ້ສຳເລັດຂັ້ນຕອນການເຊັນສັນຍາຂົນສົ່ງທາງອາກາດ 2 ຝ່າຍ ຈຳນວນ 1 ສະບັບ ແລະ ສັນຍາຂົນສົ່ງທາງອາກາດຫລາຍຝ່າຍອາຊຽນຈຳນວນ 3 ສະບັບ ແລະ ອື່ນໆ.

- ວຽກຄຸ້ມຄອງມາດຕະຖານການບິນ: ໄດ້ສຳເລັດການເຊັນແລະຮັບຮອງບັນດາຄູ່ມືວຽກງານກວດກາການບິນ, ເຕັກນິກເຮືອບິນ ຈຳນວນ 38 ຫົວ; ສຳເລັດການກວດກາ ແລະ ຕໍ່ AOC ຈຳນວນ 3 ສາຍການບິນ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.5 ວຽກງານທາງລົດໄຟ:

- ໄດ້ເອົາໃຈໃສ່ ພັດທະນາການຂົນສົ່ງທາງລາງ ໂດຍການຄຸ້ມຄອງຈັດຕັ້ງປະຕິບັດໂຄງການກໍ່ສ້າງ ໂຄງລ່າງພື້ນຖານທາງລາງ ເຊັ່ນ:
  - ✓ ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ (ເຊື່ອມຕໍ່ແຕ່ ນະຄອນຫຼວງວຽງຈັນ ຫາ ບໍເຕັນ);
  - ✓ ໂຄງການກໍ່ສ້າງທາງລົດໄຟລາວ-ໄທ ໄລຍະ 2 (ເຊື່ອມຕໍ່ແຕ່ສະຖານນີທ່ານາແລ້ງ ຫາ ຄໍາສະຫວາດ).

- ຄົ້ນຄ້ວາກະກຽມ ບັນດານິຕິກໍາທີ່ກ່ຽວຂ້ອງຕ່າງໆ ເພື່ອຄຸ້ມຄອງການຂົນສົ່ງທາງລາງພາຍຫຼັງໂຄງການກໍ່ສ້າງຂ້າງເທິງສໍາເລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ

◆ **ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ:**

- ເປັນໂຄງການຮ່ວມມືຍຸດທະສາດຂອງສອງປະເທດລາວ-ຈີນ ເຊິ່ງພັກ ແລະ ລັດຖະບານຂອງສອງປະເທດລາວ ແລະ ສປ.ຈີນ ໄດ້ເອົາໃຈໃສ່ເປັນພິເສດ;

- ເປັນໂຄງການທີ່ມີຄວາມໝາຍຄວາມສໍາຄັນ ໃນການຈັດຕັ້ງປະຕິບັດນະໂຍບາຍຂອງ ສປປ ລາວ ໃນການຫັນປະເທດຈາກສະຖານະພາບການເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ເປັນປະເທດເຊື່ອມຈອດ; ແລະ ນະໂຍບາຍຂອງ ສປ.ຈີນ "ໜຶ່ງແລວໜຶ່ງເສັ້ນທາງ".

- ຄວາມຄືບໜ້າຂອງການປະຕິບັດວຽກໂຄງການດັ່ງກ່າວ, ຮອດເດືອນ ທັນວາ 2018 ແມ່ນ 55,69%. (ຄວາມຄືບໜ້າ ຮອດເດືອນມີນາ 2019 ສໍາເລັດ 65%)

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ



## 2.6 ວຽກງານເຄຫາ ແລະ ຜັງເມືອງ:

- ໄດ້ສໍາເລັດການປັບປຸງເນື້ອໃນ ກົດລະບຽບວ່າດ້ວຍການຄຸ້ມຄອງ ການອອກແບບສໍານັກງານອົງການຂອງລັດ ແລະ ລະບຽບແນະນໍາກ່ຽວກັບ ການກວດກາເອກະສານໂຄງການກໍ່ສ້າງ, ສໍາເລັດປັບປຸງລາຄາຫົວໜ່ວຍການກໍ່ສ້າງເຄຫາສະຖານ ແລະ ປື້ມຄູ່ມືການຄິດໄລ່ບໍລິມາດໜ້າວຽກກໍ່ສ້າງ ແລະ ການສິ້ນເປືອງວັດສະດຸກໍ່ສ້າງເຄຫາສະຖານ; ໄດ້ສໍາເລັດ ຮ່າງດໍາລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການອອກແບບສໍານັກງານຂອງລັດ.
- ໄດ້ສໍາເລັດການສໍາຫຼວດອອກແບບ ແລະ ປັບປຸງຜັງເມືອງໃນຂອບເຂດທົ່ວປະເທດ ສໍາເລັດ 96,62% (ທັງໝົດ 148 ເມືອງທົ່ວປະເທດ)
- ໄດ້ຕິດຕາມ ແລະ ຊຸກຍູ້ໂຄງການກໍ່ສ້າງທີ່ຮັບຜິດຊອບ ເຊັ່ນ:ປັບປຸງ ແລະກໍ່ສ້າງສະໜາມຂີ້ເຫຍື້ອແຫ່ງໃຫມ່ ບ້ານມ່ວງພາ ເມືອງແປກ(ຊຂ)(86,94%); ຄກ.ກໍ່ສ້າງອາຄານຫຼັງໃໝ່ຂອງສໍານັກງານກະຊວງ ຍທຂ ຢູ່ວັດນາກ (75,5%); ຄກ.ກໍ່ສ້າງຫ້ອງການ ຍທຂ ເມືອງໜອງແຮດ (ຊຂ)(100%); ຄກ.ກໍ່ສ້າງຫ້ອງການ ຍທຂ ເມືອງຄູນ (93,6%); ຄກ.ປັບປຸງສິ່ງແວດລ້ອມຕົວເມືອງປາກເຊ (74,6%), ຄກ.ພັດທະນາຕົວເມືອງຕາມແລວທາງ GMS1 ທີ່ (ສນຂ) (84,6%); ຄກ.ພັດທະນາຕົວເມືອງຕາມແລວທາງ GMS2 (47,9%);

# 2. ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ

## 2.7 ວຽກງານນ້ຳປະປະ ແລະ ສຸຂະພິບານ:

- ຮອດທ້າຍປີ 2018 ສະຖິຕິການສະໜອງນ້ຳປະປາໃນເທດສະບານເມືອງ ບັນລຸປະມານ 74%; ຖ້າຄິດໄລ່ການສະໜອງໃນຂອບເຂດທົ່ວປະເທດ ແມ່ນປະມານ 25%.
- ຕິດຕາມການປະຕິບັດໂຄງການຕ່າງໆຕາມແຜນອະນຸມັດເຊັ່ນ: ຄກ.ພັດທະນາ ແລະ ສົ່ງເສີມຄວາມເຂັ້ມແຂງໃຫ້ແກ່ຂະແໜງນ້ຳປະປາ; ຄກ.ກໍ່ສ້າງ ແລະສ້ອມແປງລະບົບທໍ່ວງານ, ອາງທໍ່ສົ່ງນ້ຳດິບຂອງລະບົບນ້ຳປະປາ ເມືອງຄຳ ແລະ ຂະຫຍາຍລະບົບທໍ່ນ້ຳປະປາ ເຂົ້າບ້ານນາຍອງເມືອງຄຳ (ຊຂ)(85%); ສຳເລັດ ຄກ.ກໍ່ສ້າງນ້ຳປະປາເມືອງນາກາຍ(ຄມ); ຄກ.ກໍ່ສ້າງນ້ຳປະປາ ເມືອງຈອມເພັດ (ຫຼພບ)(12,74%); ຄກ.ກໍ່ສ້າງນ້ຳປະປາ ເມືອງປາກແຊງ (ຫຼພບ)(32,9%); ກະກຽມຈັດຕັ້ງປະຕິບັດ ຄກ.ກໍ່ສ້າງພັດທະນາລະບົບນ້ຳປະປາ 3 ແຂວງພາກໃຕ້(UN-Habitat); ຄກ.ກໍ່ສ້າງນ້ຳປະປາຕົວເມືອງນ້ອຍ ແລະ ຊົນນະບົດ(KFW).
- ໄດ້ເອົາໃຈໃສ່ ສ້າງບັນດານິຕິກຳ ເພື່ອເປັນເຄື່ອງມືໃນການຄຸ້ມ ເຊັ່ນ: ຄົ້ນຄວ້າລາຄາຫົວໜ່ວຍນ້ຳປະປາ ສຳເລັດໄດ້ 40%; ສາເລັດຮ່າງຫົວຂໍ້ມາດຕະຖານເຕັກນິກວຽກງານນ້ຳປະປາ;ສຳເລັດຮ່າງລະບຽບອອກໃບອະນຸຍາດດຳເນີນທຸລະກິດວຽກນ້ຳປະປາ; ສຳເລັດຮ່າງບົດແນະນຳທາງດ້ານເຕັກນິກວຽນນ້ຳປະປາ; ສາເລັດຮ່າງປັບປຸງນະໂຍບາຍລາຄານ້ຳປະປາ; ສຳເລັດຮ່າງບົດແນະນຳ ກ່ຽວກັບ ການທົບທວນລາຄານ້ຳປະປາ.

# 3. ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ

## 3.1 ການບໍລິການ-ຈໍລະຈອນຂົນສົ່ງ:

- **ການບໍລິການ-ຈໍລະຈອນຂົນສົ່ງທາງບົກ:** ໃນໄລຍະ 2 ປີ ຜ່ານມາ ການປະຕິບັດການບໍລິການ-ຈໍລະຈອນຂົນສົ່ງທາງບົກ ປະຕິບັດໄດ້ດີສົມຄວນ. ການປະຕິບັດ ການຂົນສົ່ງໂດຍສານ ໄດ້ເພີ່ມຂຶ້ນຈາກ 69.430 ພັນຖ້ຽວ ໃນປີ 2017 ເປັນ 72.400 ພັນຄົນ ໃນປີ 2018; ແລະ ການຂົນສົ່ງສິນຄ້າ ໄດ້ເພີ່ມຂຶ້ນຈາກ 5.795 ພັນໂຕນ ມາເປັນ 6.012 ພັນໂຕນ ໃນປີ 2018. ເຊິ່ງໄດ້ຊີ້ໃຫ້ເຫັນວ່າອັດຕາການເພີ່ມຂຶ້ນ ຂອງ ການຂົນສົ່ງໂດຍສານ ແລະ ການຂົນສົ່ງໂດຍສານ ເທົ່າກັບ 4,28% ແລະ 3,74% ຕາມລໍາດັບ.

| ລາຍການ | | ຂົນສົ່ງໂດຍສານ (ພັນຄົນ) | | ຂົນສົ່ງສິນຄ້າ (ພັນໂຕນ) | |
|---|---|---|---|---|---|
| | | ປີ 2017 | ປີ 2018 | ປີ 2017 | ປີ 2018 |
| ບໍລິມາດຂົນສົ່ງທາງບົກ | ແຜນການ | 52.112 | 75.000 | 4.860 | 7.000 |
| | ປະຕິບັດໄດ້ | 69.430 | 72.400 | 5.795 | 6.012 |
| | ອັດຕາສ່ວນປະຕິບັດ ທຽບ ແຜນການ | 133,2% | 96,5% | 119,2% | 85,9% |

# 3. ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ



## 3.1 ການບໍລິການ-ຈໍລະຈອນຂົນສົ່ງ: (ຕໍ່)

- **ການບໍລິການ-ຈໍລະຈອນຂົນສົ່ງທາງນໍ້າ:** ສໍາລັບບໍລິການການຂົນສົ່ງທາງນໍ້າ ການປະຕິບັດການຂົນສົ່ງໂດຍສານ ໄດ້ເພີ່ມຂຶ້ນຈາກ 3.964 ພັນຄົນ ໃນປີ 2017 ເປັນ 4.091 ພັນຄົນ ໃນປີ 2018; ແລະ ການຂົນສົ່ງສິນຄ້າ ໄດ້ເພີ່ມຂຶ້ນຈາກ 2.763 ພັນໂຕນ ມາເປັນ 2.823 ພັນໂຕນ ໃນປີ 2018. ຄິດໄລ່ ອັດຕາການເພີ່ມຂຶ້ນ ຂອງ ການຂົນສົ່ງໂດຍສານ ແລະ ການຂົນສົ່ງໂດຍສານ ເທົ່າກັບ 3,20% ແລະ 2,17% ຕາມລໍາດັບ.

| ລາຍການ | | ຂົນສົ່ງໂດຍສານ (ພັນຄົນ) | | ຂົນສົ່ງສິນຄ້າ (ພັນໂຕນ) | |
|---|---|---|---|---|---|
| | | ປີ 2017 | ປີ 2018 | ປີ 2017 | ປີ 2018 |
| ບໍລິມາດຂົນສົ່ງທາງນໍ້າ | ແຜນການ | 4.000 | 4.300 | 2.700 | 2.900 |
| | ປະຕິບັດໄດ້ | 3.964 | 4.091 | 2.763 | 2.823 |
| | ອັດຕາສ່ວນປະຕິບັດທຽບ ແຜນການ | 99,1% | 95,1% | 102,3% | 97,3% |

# 3. ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ



## 3.1 ການບໍລິການ-ຈໍລະຈອນຂົນສົ່ງ: (ຕໍ່)

- **ການບໍລິການ-ຈໍລະຈອນຂົນສົ່ງອາກາດ:** ການຂົນສົ່ງໂດຍສານ (ຂາເຂົ້າ+ຂາອອກ+ຜ່ານ) ໄດ້ເພີ່ມຂຶ້ນຈາກ 2.430 ພັນຄົນ ໃນປີ 2017 ເປັນ 3.002 ພັນຄົນ ໃນປີ 2018; ແລະ ການຂົນສົ່ງສິນຄ້າ ໄດ້ຫຼຸດລົງຈາກ 3.7 ພັນໂຕນ ມາເປັນ 3.6 ພັນໂຕນ ໃນປີ 2018.

| ລາຍການ | | ຂົນສົ່ງໂດຍສານ (ພັນຄົນ) | | ຂົນສົ່ງສິນຄ້າ (ພັນໂຕນ) | |
|---|---|---|---|---|---|
| | | ປີ 2017 | ປີ 2018 | ປີ 2017 | ປີ 2018 |
| ບໍລິມາດຂົນສົ່ງທາງອາກາດ | ແຜນການ | 3.000 | 3.600 | 5,0 | 5,6 |
| | ປະຕິບັດໄດ້ | 2.430 | 3.002 | 3,7 | 3,6 |
| | ອັດຕາສ່ວນປະຕິບັດ ທຽບ ແຜນການ | 81,0% | 83,4% | 73,4% | 64,3% |

# 3. ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ

## 3.1 ການບໍລິການ-ຈໍລະຈອນຂົນສົ່ງ: (ຕໍ່)

- **ບໍລິການ-ຈໍລະຈອນຂົນສົ່ງທາງລົດໄຟ:**
  ການປະຕິບັດການບໍລິການ-ຈໍລະຈອນຂົນສົ່ງທາງລົດໄຟປັດຈຸບັນຍັງມີພຽງແຕ່ການຂົນສົ່ງໂດຍສານ ໃນປີ 2017 ສາມາດປະຕິບັດໄດ້ 32.248 ແລະ ເພີ່ມຂຶ້ນເປັນ 35.141 ຄົນ ໃນປີ 2018; ອັດຕາການເພີ່ມຂຶ້ນເທົ່າກັບ 9%.

## 3.2 ການຄຸ້ມຄອງພາຫະນະ

- ເລີ່ມແຕ່ປີ 2017 ເປັນຕົ້ນມາ ໄດ້ສືບຕໍ່ປະຕິບັດ ໂຄງການສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງສູນທົດສອບຜະລິດຕະພັນຍານພາ ຫະນະທີ່ຈຳເປັນ ໃນ ສປປ ລາວ ແລະ ໂຄງການຄຸ້ມຄອງຍານພາຫະນະ ແລະ ການຂັບຂີ່ແບບທັນສະໄໝ;

- ສະຖິຕິການຂຶ້ນທະບຽນພາຫະນະຮອດປີ 2018 ແມ່ນມີທັງໝົດ 2.034.927 ຄັນ ໃນນີ້ ເປັນລົດ 2 ລໍ້ 1.544.597 ຄັນ ກວມເອົາ 75,9% ຂອງຈຳນວນທັງໝົດ ແລະ ນະຄອນຫລວງວຽງຈັນ ຍັງເປັນບ່ອນທີ່ມີການຂຶ້ນທະບຽນພາຫະນາສູງທີ່ສຸດ ຄື 871.317 ຄັນ ເທົ່າກັບ 42,8%.

# ※ ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາ ໄລຍະເຄິ່ງຕົ້ນສະໄໝ 2016-2018

# 1.3 ແຜນງານຈຸດສຸມ ແລະ ແຜນວຽກຈຸດສຸມ



**ແຜນງານ ຈຸດສຸມ 1**: ແຜນງານບູລະນະ ແລະ ສ້ອມແປງ ບັນດາໂຄງລ່າງພື້ນຖານທີ່ມີຢູ່ໃຫ້ສາມາດນຳໃຊ້ໄດ້ ຢ່າງປົກກະຕິ (ມີ 3 ແຜນວຽກຈຸມສຸມ)

**ແຜນງານ ຈຸດສຸມ 2**: ແຜນງານກໍ່ສ້າງ ແລະ ຍົກລະດັບພື້ນຖານໂຄງລ່າງດ້ານຄົມມະນາຄົມຂົນສົ່ງ; (ມີ 20 ແຜນວຽກຈຸມສຸມ)

**ແຜນງານ ຈຸດສຸມ 3**: ແຜນງານພັດທະນາລະບົບການຂົນສົ່ງ ແລະ ການບໍລິການດ້ານຄົມມະນາຄົມຂົນສົ່ງ (ມີ 5 ແຜນວຽກຈຸມສຸມ)

**ແຜນງານ ຈຸດສຸມ 4**: ແຜນງານພັດທະນາການຄົ້ນຄ້ວາຂອງຂະແໜງການ ຍທຂ (ມີ 3 ແຜນວຽກຈຸມສຸມ)

**ແຜນງານ ຈຸດສຸມ 5**: ແຜນງານສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ ຍທຂ (ມີ 3 ແຜນວຽກຈຸມສຸມ)

# (ຕົວຢ່າງ) ລັກສະນະ/ຫຼັກການຂອງການຕີລາຄາ [ແບບ1]



**1)** <u>ແຜນວຽກຈຸດສຸມ 01:</u> ບູລະນະສ້ອມແປງ, ຟື້ນຟູແລະປັບປຸງຕາໜ່າງເສັ້ນທາງຫຼວງແຫ່ງຊາດແລະທາງຫຼວງທ້ອງຖິ່ນໃນຂອບເຂດທົ່ວປະເທດ

1 <u>ຕົວຊີ້ວັດ 1.1:</u> ເສັ້ນທາງຢູ່ໃນສະພາບດີ ຫຼື ພໍໃຊ້:
(ອັດຕາສ່ວນຂອງລວງຍາວເສັ້ນທາງ ທີ່ຢູ່ໃນສະພາບດີ ຫຼື ພໍໃຊ້ ທຽບໃສ່ລວງຍາວຂອງເສັ້ນທາງທັງໝົດ)

ຄາດໝາຍຮອດ ປີ 2020: **60%**

## ການຈັດຕັ້ງປະຕິບັດ ຮອດເຄິ່ງຕົ້ນສະໄໝ (2016-2018)

| ບ້ວງງົບປະມານກອງທຶນທາງ | | ປີ 2016 | ປີ 2017 | ປີ 2018 | ລວມ |
|---|---|---|---|---|---|
| ໂຄງການ ບູລະນະຮັກສາ ທາງຫລວງ | ໂຄງການ | 22 | 25 | 25 | **72** |
| | ສັນຍາ | 106 | 126 | 130 | **362** |
| | **ມູນຄ່າ (ຕື້ກີບ)** | **463,44** | **581,77** | **596,66** | **1.641,87** |

※ ແຫ່ງຂໍ້ມູນ: ບົດສະຫຼຸບ ສົກປີ 2015-16, ປີ 2017 ແລະ ປີ 2018

## ຕີລາຄາ (*4)

- ຕົວເລກໃນປີຖານ: 47,5%
- ຮອດກາງສະໄໝ: ບັນລຸໄດ້ 51,7 %
- ຕີລາຄາຄວາມຄືບໜ້າ ທຽບໃສ່ຄາດໝາຍທີ່ຈະບັນລຸໃນປີ 2020: **33,6%**

(*4) ຕີລາຄາດ້ານວິຊາການ ໂດຍຖືເອົາຕົວເລກຄາດໝາຍທີ່ຕັ້ງໄວ້ ເປັນ100%, ທີມງານວິຊາການຕີລາຄາ ກົມແຜນການ ແລະ ການຮ່ວມມື, 12/12/2018

# (ຕົວຢ່າງ) ລັກສະນະ/ຫຼັກການຂອງການຕີລາຄາ [ແບບ2]



| | |
|---|---|
| **4)** | ແຜນວຽກຈຸດສຸມ 04: ສູ້ຊົນປັບປຸງ-ຍົກລະດັບບັນດາເສັ້ນທາງຫລວງແຫ່ງຊາດທີ່ເປັນທາງຜ່ານແລະເຊື່ອມຕໍ່ຂອງອານຸພາກພື້ນໃນກອບການຮ່ວມມືGMS ໃຫ້ໄດ້ມາດຕະຖານອາຊຽນ; ຍົກລະດັບບັນດາເສັ້ນທາງຕາມແຜນຍຸດທະສາດດ້ານໂລຈິສະຕິກໃຫ້ສາມາດຮັບນ້ຳໜັກຂົນສົ່ງໄດ້ 11 ໂຕນ/ເພົາເພື່ອຮອງຮັບການຫັນເປັນອຸດສາຫະກຳແລະທັນສະໄໝ. |

(*5) ຕີລາຄາລວມ:

- ໃນຈຳນວນທາງຫຼວງແຫ່ງຊາດ 6 ເສັ້ນ ທີ່ເປັນທາງຜ່ານ ແລະ ເສັ້ນທາງເຊື່ອມຕໍ່ຂອງອານຸພາກພື້ນ, 2 ເສັ້ນສາຍຫຼັກໄດ້ຖືກຍົກລະດັບໃຫ້ສາມາດຮັບນ້ຳໜັກໄດ້ 11 ໂຕນ/ເພົາ ຕາມມາດຕະຖານອາຊຽນ, ສາມາດນຳໃຊ້ຂົນສົ່ງສິນຄ້າ ແລະ ໂດຍສານ ໄດ້ຢ່າງສະດວກ ແລະ ລຶງລ່ຽນ ໂດຍພື້ນຖານຄື:
  - ➢ ເສັ້ນທາງ R3 (ທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຕອນທາງແຕ່ບໍ່ເຕັນ-ນາເຕີຍ-ຫ້ວຍຊາຍ);
  - ➢ ເສັ້ນທາງ R2 (ທາງຫຼວງແຫ່ງຊາດ ເລກທີ 9 ຕອນທາງແຕ່ສະຫວັນນະເຂດ-ເຊໂນ-ເມືອງພິນ-ລາວບາວ).
- ອີກ 4 ເສັ້ນ ແມ່ນຍັງສືບຕໍ່ປັບປຸງ ເພື່ອໃຫ້ໄດ້ຕາມມາດຕະຖານອາຊຽນ:

**ຕີລາຄາ** (*5)

- ➢ ຄາດໝາຍ: 6 ເສັ້ນ
- ➢ ຮອດກາງສະໄໝ: ບັນລຸໄດ້ 2 ເສັ້ນ
- ➢ ຕີລາຄາຄວາມຄືບໜ້າທຽບໃສ່ຄາດໝາຍທີ່ຈະບັນລຸໃນປີ 2020:

**33,3%**

# ຜົນຂອງການຕີລາຄາແຕ່ລະແຜນວຽກຈຸດສຸມ(*4)(*5)

| ແຜນງານ ຈຸດສຸມ ໃນ 5 ປີ | ຈຳນວນ ແຜນວຽກ ຈຸດສຸມ ທີ່ກຳນົດ ໃນຕົ້ນສະໄໝ | ລຳດັບ ແຜນວຽກ ຈຸດສຸມ | ຕີລາຄາ ທຽບໃສ່ ຄາດໝາຍ | ອັດຕາສ່ວນສະເລ່ຍ ຕີລາຄາຄວາມຄືບໜ້າ ຮອດກາງສະໄໝ (ທຽບໃສ່ຄາດໝາຍ ກຳນົດເບື້ອງຕົ້ນ) |
|---|---|---|---|---|
| ແຜນງານ ຈຸດສຸມ ທີ 1 | 3 | 1 | 33,6% | 46,20% |
| | | 2 | 45,0% | |
| | | 3 | 60,0% | |
| ແຜນງານ ຈຸດສຸມ ທີ 2 | 20 | 4 | 33,3% | 48,87% |
| | | 5 | 20,0% | |
| | | 6 | 65,0% | |
| | | 7 | 35,0% | |
| | | 8 | 55,0% | |
| | | 9 | 32,0% | |
| | | 10 | 48,0% | |
| | | 11 | 50,0% | |
| | | 12 | 68,0% | |
| | | 13 | 100,0% | |
| | | 14 | 48,0% | |
| | | 15 | 62,0% | |
| | | 16 | 54,0% | |
| | | 17 | 52,0% | |
| | | 18 | 26,0% | |
| | | 19 | 40,0% | |
| | | 20 | 60,0% | |
| | | 21 | 38,0% | |
| | | 22 | 51,0% | |
| | | 23 | 40,0% | |
| ແຜນງານ ຈຸດສຸມ ທີ 3 | 5 | 24 | 55,0% | 32,00% |
| | | 25 | 30,0% | |
| | | 26 | 25,0% | |
| | | 27 | 20,0% | |
| | | 28 | 30,0% | |
| ແຜນງານ ຈຸດສຸມ ທີ 4 | 5 | 29 | 62,0% | 43,40% |
| | | 30 | 50,0% | |
| | | 31 | 30,0% | |
| | | 32 | 30,0% | |
| | | 33 | 45,0% | |
| ແຜນງານ ຈຸດສຸມ ທີ 5 | 11 | 34 | 55,0% | 53,64% |
| | 44 | 35 | 100,0% | |
| | | 36 | 60,0% | |
| | | 37 | 65,0% | |
| | | 38 | 55,0% | |
| | | 39 | 55,0% | |
| | | 40 | 35,0% | |
| | | 41 | 50,0% | |
| | | 42 | 50,0% | |
| | | 43 | 40,0% | |
| | | 44 | 25,0% | |

# ຕີລາຄາສັງລວມ ຕາມແຜນງານຈຸດສຸມ



- ແຜນງານ ຈຸດສຸມ 1
- ແຜນງານ ຈຸດສຸມ 2
- ແຜນງານ ຈຸດສຸມ 3
- ແຜນງານ ຈຸດສຸມ 4
- ແຜນງານ ຈຸດສຸມ 5

| ແຜນງານ ຈຸດສຸມ ໃນ 5 ປີ | ຈຳນວນ ແຜນວຽກ ຈຸດສຸມ ທີ່ກຳນົດ ໃນຕົ້ນສະໄໝ | ອັດຕາສ່ວນສະເລ່ຍ ຕີລາຄາຄວາມຄືບໜ້າ ຮອດກາງສະໄໝ (ທຽບໃສ່ຄາດໝາຍ ກຳນົດເບື້ອງຕົ້ນ) |
|---|---|---|
| ແຜນງານທີ 1 | 3 | 46,20% |
| ແຜນງານທີ 2 | 20 | 48,87% |
| ແຜນງານທີ 3 | 5 | 32,00% |
| ແຜນງານທີ 4 | 5 | 43,40% |
| ແຜນງານທີ 5 | 11 | 53,64% |
| ຕີລາຄາສະເລ່ຍ: | | 44,82% |

# II. ຕີລາຄາສາເຫດທີ່ພາໃຫ້ມີຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້

# 1) ສາເຫດທີ່ພາໃຫ້ມີຜົນສຳເລັດ:

- ຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ຊິດ ຈາກກົມການເມືອງສູນກາງພັກ ແລະ ລັດຖະບານ,ຄະນະພັກ ຄະນະນຳກະຊວງ ເວລາໃດກໍຍຶດໝັ້ນແນວທາງນະໂຍບາຍ ຂອງພັກ ແລະ ມະຕິກອງປະຊຸມໃຫ່ຍຄັ້ງທີ X ຂອງພັກ ເປັນທິດໃນການຊີ້ນຳໆພາ ຕິດພັນກັບການຈັດຕັ້ງຜັນຂະຫຍາຍມະຕິ ກອງປະຊຸມໃຫ່ຍ ຄັ້ງທີ IV ຂອງອົງຄະນະ ພັກ ກະຊວງ ຍທຂ.

- ຍ້ອນຄະນະນຳຂອງກະຊວງ ຍທຂ ເວລາໃດກໍ່ຖືເອົາວຽກການປັບປຸງຄວາມເຂັ້ມງວດ ໃນການປະຕິບັດວິໄນ ແຜນການເປັນບູລິມະສິດ ເຮັດໃຫ້ສາມາດຄຸ້ມຄອງການລົງທຶນ ຂອງລັດ ໄດ້ຮັດກຸມເທື່ອລະກ້າວ.

- ຍ້ອນມີການຕີລາຄາ ຖອດຖອນບົດຮຽນ ແລກປ່ຽນຂໍ້ຄິດເຫັນທາງດ້ານວິຊາການ ໃນ ການຈັດຕັ້ງປະຕິບັດວຽກງານແຜນການ ໃນຕະຫຼອດ 2 ປີຜ່ານມາ.

# 1) ສາເຫດທີ່ພາໃຫ້ມີຜົນສຳເລັດ (ຕໍ່):



- ຍ້ອນຄະນະພັກຄະນະນຳກະຊວງ ຍທຂ ມີລະບອບລະບຽບແບບແຜນ ມີການແບ່ງຄວາມຮັບຜິດຊອບ ຈະແຈ້ງ ມີວິທີເຮັດວຽກ ທີ່ເປັນລະບົບ ມີຫລັກການໃນການນຳພາລະບອບປະຊຸມປຶກສາຫາລືແລະ ຕັດສິນບັນຫາສຳຄັນຂອງຂະແໜງການຢ່າງເປັນເອກະພາບ  ແລະ ມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງຂະແໜງການຜູ້ຮັບຜິດຊອບວຽກງານຕົວຈິງ.

- ຄະນະພັກ ຄະນະນຳ ກະຊວງ ໄດ້ມີຄວາມສະດຸ້ງໄວ ສຸມໃສ ການປັບປຸງການຈັດຕັ້ງຢ່າງຕັ້ງໜ້າແລະ ພັດທະນາບຸກຄະລະກອນໃຫ້ເພື່ອໃຫ້ ສົມຄູ່ແລະ ຕອບສະໜອງກັບຄວາມຕ້ອງການວຽກງານໃນໄລຍະໃໝ່

- ຍ້ອນຄວາມເອົາໃຈໃສ່ ຄວາມຮັບຜິດຊອບສູງ ຂອງຄະນະພັກຄະນະນຳ ໃນການເຂົ້າຮ່ວມ ການຮ່ວມມື ຍາດແຍງ ການຊ່ວຍເຫລືອ ສາກົນ ເພື່ອນມິດ ທາງດ້ານທຶນຮອນເຕັກນິກ ເຕັກໂນໂລຊີ ວິຊາການ ....ຕາມແນວທາງການຕ່າງປະເທດຂອງພັກ-ລັດ ຢ່າງຖືກທິດ ແລະ ສອດຄ່ອງກັບສະພາບການ.

# 2) ຂໍ້ຄົງຄ້າງ ແລະ ສາເຫດທີ່ພາໃຫ້ມີ ຂໍ້ຄົງຄ້າງ :



- ການຄົ້ນຄວ້ານິຕິກຳລຸ່ມກົດໝາຍຂອງຂະແໜງການ ຍັງຊັກຊ້າ ແລະ ບັນດາຄູ່ມືຄຸ້ມຄອງສະເພາະຂອງຂະແໜງການ ຍັງບໍ່ທັນໄດ້ຮັບການປັບປຸງຜັນຂະຫຍາຍ.
- ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດຂອງກະຊວງ ຍທຂ ໂດຍລວມ ຍັງບໍ່ເປັນໄປຕາມແຜນການທີ່ວາງໄວ້ໃນຕົ້ນປີ ເທົ່າທີ່ຄວນ. ການວາງແຜນ ທີ່ຍັງບໍ່ຫັດກຸ່ມ ແລະ ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງຂອງໂຄງການ.
- ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ແລະ ການເບີກຈ່າຍງົບປະມານ ເຫັນວ່າມີຂັ້ນຕອນ ແລະ ຫລັກການໃໝ່ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດການຄຸ້ມຄອງການລົງທຶນຂອງລັດຍັງມີຄວາມບໍ່ເປັນເອກະພາບ ແລະ ບໍ່ທັນໄດ້ດີເທົ່າທີ່ຄວນ.
- ຄຸນນະພາບຂອງພະນັກງານຈຳນວນນຶ່ງ ຍັງບໍ່ທັນສູງເດັ່ນທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງຍຸກສະໄໝ.
- ການປະຕິບັດວຽກຮ່ວມມືກັບຕ່າງປະເທດ ຂອງຂະແໜງການ ຍທຂ ຍັງບໍ່ທັນໄດ້ເປັນເຈົ້າການເທົ່າທີ່ຄວນ; ການຜັນຂະຫຍາຍຈັດຕັ້ງປະຕິບັດສັນຍາ, ອະນຸສັນຍາ ແລະ ບັນດາບົດບັນທຶກຕ່າງໆຍັງຊັກຊ້າ ແລະແກ່ຍາວ; ແລະ ການຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອເພື່ອການພັດທະນາ ຍັງມີລັກສະນະຊັກຊ້າ ແກ່ຍາວບາງໂຄງການກໍ່ບໍ່ສຳເລັດຕາມແຜນ.

# 3) ບົດຮຽນທີ່ຖອດຖອນໄດ້:

- ສ້າງກົນໄກໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ເປັນເອກະພາບ ໂດຍສະເພາະການຄຸ້ມຄອງ ມະຫາພາກ ຂອງຂັ້ນສູນກາງ ແລະ ການເປັນເຈົ້າການໃນການປະຕິບັດຕົວຈິງຂອງທ້ອງຖິ່ນ ທີ່ໂຄງການ ຖືກຈັດຕັ້ງປະຕິບັດຢູ່ ໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບທິດ 3 ສ້າງໃຫ້ຫຼາຍຂຶ້ນ.
- ຍົກສູງວຽກງານຕິດຕາມ ແລະ ຊຸກຍູ້ຂອງຂະແໜງແຜນການ ແລະ ການເງິນ ຕິດພັນກັບວຽກງານກວດກາແຕ່ຫົວທີ ຂອງຂະແໜງກວດກາ ໃຫ້ຫຼາຍຂຶ້ນກ່ວາເກົ່າ ເພື່ອຮັບປະກັນວິໄນແຜນການ-ການເງິນ.
- ການພັດທະນາບຸກຄະລາກອນຮອບດ້ານໃຫ້ແກ່ພະນັກງານ ຢູ່ທົ່ວຂະແໜງການ ຍທຂ ເປັນສິ່ງຈຳເປັນ ແລະ ສຳຄັນ. ເພື່ອສາມາດຄຸ້ມຄອງວຽກງານ ຍທຂ ໃຫ້ມີປະສິດທິພາບ ມີປະສິດທິຜົນ ແລະ ທັນສະໄໝ.
- ຕ້ອງໄດ້ເພີ່ມທະວີການປະສານງານລະຫວ່າງ ຂະແໜງການດ້ວຍກັນ ແລະ ຂະແໜງການ ກັບທ້ອງຖິ່ນ ເພື່ອແລກປ່ຽນຄວາມເຂົ້າໃຈໃຫ້ຫລາຍຂຶ້ນ.
- ເພີ່ມທະວີປະຕິບັດຕາມ 5 ໜ້າທີ່ຄຸ້ມຄອງມະຫາພາກ ຂອງ ກະຊວງ ຍທຂ, ໃນນີ້ ຕ້ອງເລັ່ງໃສ່ການສ້າງ ແລະ ປັບປຸງກົດໝາຍ ລວມທັງບັນດານິຕິກຳລຸ່ມກົດໝາຍ.

# III. ທິດທາງແຜນການປີ 2019-2020

# 3.1 ສະພາບລວມ:

- ປີ 2019-2020 ແມ່ນເປັນ 2 ປີສຸດທ້າຍຂອງການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2016-2020 ຂອງຂະແໜງການ ຍທຂ

- ກະຊວງ ຍທຂ ຈະສຸມໃສ່ສືບຕໍ່ປະຕິບັດບັນດາໜ້າວຽກທີ່ຍັງຄົງຄ້າງ ເພື່ອບັນລຸບັນດາຄາດໝາຍພື້ນຖານທີ່ວາງໄວ້ ໃນແຜນດັ່ງກ່າວ ໂດຍສະເພາະ ບັນດາຕົວເລກຕົວຊີ້ວັດໃນຂອບການຕິດຕາມປະເມີນຜົນ ທີ່ກຳນົດໄວ້ ທີ່ຍັງບໍ່ທັນສາມາດ ບັນລຸໄດ້ຕາມຄາດໝາຍ;

- ໄປພ້ອມໆກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດໝົດສະໄໝຂອງແຜນພັດທະນາ 5 ປີຂອງຂະແໜງການດັ່ງກ່າວ ເພື່ອຊີ້ໃຫ້ເຫັນຜົນສຳເລັດທີ່ສາມາດປະກອບສ່ວນ ຊຸກຍູ້ການຈັດຕັ້ງປະຕິບັດແຜນລວມ ແຫ່ງຊາດ.

- ກະຊວງ ຍທຂ ໄດ້ກຳນົດແຜນຈຸດສຸມ ໃນປີ 2019-2020 ດັ່ງນີ້:

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:

## 3.2.1 ວຽກຈັດຕັ້ງ ແລະ ພະນັກງານ

- ປີ 2019-2020 ກະຊວງ ຍທຂ ຈະສືບຕໍ່ເອົາໃຈໃສ່ວຽກງານ ບຳລຸງສ້າງພະນັກງານ ທາງດ້ານການເມືອງແນວຄິດ ແລະ ດ້ານວິຊາສະເພາະ. ສືບຕໍ່ປັບປຸງກົງຈັດການຈັດຕັ້ງພາຍໃນການສ່ວນ ແລະ ອ້ອມຂ້າງ ໃຫ້ສຳເລັດ ແລະ ໄປຕາມທິດ ກະທັດຮັດ ເຂັ້ມແຂງ.

- ເອົາໃຈໃສ່ ປັບປຸງແບບແຜນວິທີເຮັດວຽກ ໂດຍສະເພາະການແບ່ງຂັ້ນຄຸ້ມຄອງ ເພື່ອຮັບປະກັນການສ້າງຄວາມເຂັ້ມແຂງ ໃຫ້ແກ່ຂະແໜງການ ຍທຂ ຢ່າງທົ່ວເຖິງ. ສູ້ຊົນໃຫ້ສຳເລັດ ແຜນຍຸດທະສາດພັດທະນາບຸກຄະລາກອນ ຂອງ ຂະແໜງການ ຍທຂ.

- ສືບຕໍ່ເອົາໃຈໃສ່ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານບຳນານ-ປະຈຳການ ຕາມລະບຽບຫລັກການ ແລະ ປະຕິບັດການຍ້ອງຍໍສັນລະເສີນຖັນແຖວພະນັກງານ-ສະມາຊິກພັກຢ່າງເໝາະສົມ.

## 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:



### 3.2.2 ວຽກງານແຜນການ

- ໂດຍສືບຕໍ່ການຈັດຕັ້ງປະຕິບັດການເຂັ້ມງວດດ້ານວິໄນແຜນການ, ໃນປີ 2019-2020 ຍັງຈະເປັນອີກ 2 ປີ ແຫ່ງການຂ້າມຜ່ານ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ໄດ້ເອົາເຂົ້າແຜນກ່ອນປີ 2017 (ຕາມຫຼັກການຂອງກົດໝາຍລົງທຶນສະບັບເກົ່າ) ເພື່ອຈັດຕັ້ງປະຕິບັດຕາມກົດໝາຍສະບັບໃໝ່ ໂດຍສະເພາະແມ່ນການ ກວດກາປະເມີນຄືນ ໃນໄລຍະການຈັດຕັ້ງປະຕິບັດ ແລະ ໄລຍະສຳເລັດໂຄງການ.

- ປີ 2019-2020 ຈະໄດ້ສຸມໃສ່ຈັດຕັ້ງປະຕິບັດ ວຽກງານຈຸດສຸມທີ່ສຳຄັນ ຄື:
  - ➢ ເອົາໃຈໃສ່ສະຫລຸບຕີລາຄາໝົດສະໄໝ ການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການ ຍທຂ 5 ປີ (2016-2020) ຕາມ 5 ແຜນງານ, 44 ແຜນວຽກຈຸດສຸມ ທີ່ໄດ້ກຳນົດໄວ້; ພ້ອມທັງກຳນົດທິດທາງແຜນການ ສຳລັບແຜນພັດທະນາຂະແໜງການ ຍທຂ 5 ປີ 2021-2025 ຕາມທິດຂອງເປົ້າໝາຍລວມ ແລະ ຄາດໝາຍສູ້ຊົນ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:



## 3.2.2 ວຽກງານແຜນການ (ຕໍ່)

– ປີ 2019-2020 ຈະໄດ້ສຸມໃສ່ຈັດຕັ້ງປະຕິບັດ ວຽກງານຈຸດສຸມທີ່ສຳຄັນ ຄື:

- ➢ ສືບຕໍ່ຕິດຕາມຊຸກຍູ້ ການສະເໜີດັດແກ້ ມູນຄ່າໂຄງການ ຂອງໂຄງການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຈຳນວນໜຶ່ງ ທີ່ມີມູນຄ່າອະນຸມັດຈາກສະພາແຫ່ງຊາດ ແລະ ມູນຄ່າເຊັນສັນຍາ ບໍ່ກົງກັນ;

- ➢ ສູ້ຊົນ ໃຫ້ສຳເລັດບົດແນະນຳ ຫຼື ບົດຄູ່ມືການລົງທຶນຂອງລັດ ສະເພາະຂະແໜງການ ຍທຂ ທີ່ເປັນນິຕິກຳໃຕ້ກົດໝາຍ ເພື່ອຜັນຂະຫຍາຍກົດໝາຍ 72/ສພຊ ແລະ ບົດ PCAP ຂອງກະຊວງແຜນການ ແລະ ການລົງທຶນ.

- ➢ ຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດໃຫ້ມີຄວາມຄືບໜ້າຕາມແຜນ ແລະ ຖືກຕ້ອງຕາມວິໄນແຜນການ, ພ້ອມກັບການຝຶກອົບຮົມ ວິໄນແຜນການ, ການສ້າງ ແລະ ກຳນົດແຜນ ຕະຫຼອດຮອດການກຳນົດໂຄງການບູລິມະສິດ ເພື່ອກະກຽມໃຫ້ແຜນພັດທະນາ 5 ປີ 2021-2025 ຂອງຂະແໜງການ ຍທຂ.

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:

## 3.2.3 ວຽກງານຮ່ວມມືສາກົນ:

- ສືບຕໍ່ ພົວພັນຮ່ວມມື ໃນຂອບ 2 ຝ່າຍ ແລະ ຫລາຍຝ່າຍ ແລະ ຂະບວນການໂຕະມົນ ເພື່ອຈັດຕັ້ງປະຕິບັດ ໜ້າວຽກ ຕາມສົນທິສັນຍາ, ສັນຍາ ແລະ ບົດບັນທຶກຕ່າງໆ. ໃນປີ 2019-2020 ແມ່ນຈະໄດ້ເອົາໃຈໃສ່ການຮ່ວມມືໃນກອບການຮ່ວມມືລາວ-ຫວຽດ ທີ່ກຳລັງຊຸ້ນຂ້ຽວ ໃນການປຶກສາຫາລື ແລະ ເຈລະຈາ ການຈັດຕັ້ງປະຕິບັດ ການລົງທຶນສຳປະທານ ພັດທະນາທ່າທຽບເຮືອ ຂອງທ່າເຮືອຫວຸ້ງອ່າງ;
- ຕິດຕາມຜົນການຄົ້ນຄວ້າ ການສະເໜີບັນດາໂຄງການທີ່ກ່ຽວພັນກັບ ຂະແໜງການ ຍທຂ ເຊິ່ງໄດ້ສະເໜີເຂົ້າໃນບັນຊີໂຄງການນຳໃຊ້ເງິນຊ່ວຍເຫລືອລ້າ 4 ຕື້ຢວນ ຂອງ ລັດຖະບານຈີນ ກັບ ຄະນະກຳມະການຮ່ວມມື ລາວ-ຈີນ ໃຫ້ສາມາດນຳໃຊ້ງົບປະມານດັ່ງກ່າວ;
- ສືບຕໍ່ເປັນເຈົ້າການ ໃນການຈັດຕັ້ງປະຕິບັດບັນດາໜ້າວຽກໃນໂຄງການຂະແໜງຂົວທາງລາວໄລຍະ 2 (LRSP2) ຕາມແຜນການທີ່ໄດ້ເປັນເອກະພາບກັນກັບ ຄູ່ຮ່ວມພັດທະນາ.
- ເປັນເຈົ້າການ ໃນການເຂົ້າຮ່ວມບັນດາກອງປະຊຸມລະດັບພາກພື້ນ ທີ່ສຳຄັນຕ່າງໆ ເປັນຕົ້ນແມ່ນ: ກອງປະຊຸມໂຕະມົນປະຈຳປີ 2019 ແລະ ປີ 2020, ກອງປະຊຸມໃນກອບຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ກອງປະຊຸມສາກົນກ່ຽວກັບການເຕີບໂຕສີຂຽວ ແລະ ອື່ນໆ.

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:



## 3.2.4 ວຽກງານການເງິນ:

- ຕິດຕາມຊຸກຍູ້ການເກັບລາຍຮັບປະຈຳປີ 2019 ແລະ ປີ 2020 ຂອງກະຊວງ ຍທຂ ໃຫ້ໄດ້ ຕາມແຜນການ; ຈັດຕັ້ງປະຕິບັດງົບປະມານບໍລິຫານປົກກະຕິ ໃຫ້ຖືກຕ້ອງຕາມວິໄນການເງິນ ຮັບປະກັນຕາມທິດປະຢັດມັດຖະຍັດ ທີ່ລັດຖະບານໄດ້ກຳນົດ.

- ຈັດຕັ້ງປະຕິບັດງົບປະມານລາຍຈ່າຍວິຊາການ ໃຫ້ມີປະສິດທິພາບປະສິດທິຜົນສູງ ແລະ ສູ້ຊົນໃຫ້ສາມາດເກັບລາຍຮັບໃຫ້ໄດ້ເກີນແຜນ ເພື່ອສາມາດດັດແກ້ນຳໃຊ້ປະຕິບັດວຽກງານທີ່ຈຳ ອື່ນໆ ຂອງກະຊວງ ຍທຂ.

- ຈັດຕັ້ງປະຕິບັດງົບປະມານລົງທຶນພາຍໃນຂອງລັດ ທີ່ໄດ້ຮັບອະນຸມັດໃນປີ 2019 ແລະ ຈະໄດ້ຮັບອະນຸມັດໃນປີ 2020 ໃຫ້ຖືກຕ້ອງຕາມວິໄນແຜນການ ແລະ ການເງິນ.

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:



## 3.2.5 ວຽກງານກວດກາ:

- ສືບຕໍ່ກວດກາຕາມຄໍາສັ່ງຂອງກະຊວງ ຍທຂ ແລະ ຕິດຕາມກວດກາ ຕາມການຕົກລົງຂອງຂັ້ນສູນກາງ; ສືບຕໍ່ລົງຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີໄລຍະ I ມີ 2 ໂຄງການ;
- ສູ້ຊົນແກ້ໄຂ 4 ຂໍ້ຄົງຄ້າງທີ່ແກ້ບໍ່ຕົກມາແຕ່ປີ 2015-16 ແລະ 13 ຂໍ້ຄົງຄ້າງທີ່ພົບເຫັນຈາກການກວດສອບການຈັດຕັ້ງປະຕິບັດແຜນປີ 2017 ຕາມບົດບັນທຶກການກວດສອບ ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈໍາປີ 2017 ແລະ ກວດຄືນຄໍາແນະນໍາກວດສອບສົກປີຜ່ານມາ ຂອງກະຊວງ ຍທຂ ໃຫ້ເປັນຮູບປະທໍາ.

## 3.2.6 ວຽກງານນິຕິກໍາ:

- ຄົ້ນຄວ້າຮ່າງດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງທ່າບົກ; ກະກຽມຮ່າງກົດໝາຍວ່າດ້ວຍຍານພາຫະນະ ແລະ ກົດໝາຍວ່າດ້ວຍທີ່ຢູ່ອາໄສ; ຮ່າງຂໍ້ຕົກລົງຂອງທ່ານລັດຖະມົນຕີ ວ່າດ້ວຍຫລັກສູດການຝຶກອົບຮົມ ແລະ ສອບເສັງໃບຂັບຂີ່ປະເພດດລາກ; ຮ່າງດໍາລັດວ່າດ້ວຍກົດລະບຽບຈາລະຈອນ; ຮ່າງຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການປຸກສ້າງ; ແລະ ບັນດານິຕິກໍາລຸ່ມກົດໝາຍອີກຈໍານວນໜຶ່ງ.

# 3.2 ວຽກງານຄຸ້ມຄອງມະຫາພາກຂອງກະຊວງ ຍທຂ:

## 3.2.7 ດ້ານການຄົ້ນຄວ້າມາດຕະຖານເຕັກນິກ ແລະ ຝຶກອົບຮົບ:

– ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານການເມືອງ ແລະ ວິຊາສະເພາະຂອງພະນັກງານລັດຖະກອນຂອງຂະແໜງ ຍທຂ ປີ 2019.

– ສືບຕໍ່ເອົາໃຈໃສ່ຈັດຝຶກອົບຮົມ ຕາມຫລັກສູດຕ່າງໆ ເປັນຕົ້ນແມ່ນ:
  - ຫຼັກສູດການທົດລອງດິນ,
  - ຫຼັກສູດການທົດລອງຄອນກຣີດ ແລະ ວຽກຢາງ,
  - ຫຼັກສູດການວິໄຈວັດສະດຸກໍ່ສ້າງ,
  - ຫຼັກສູດການນຳໃຊ້ໂປແກຼມຄອມພິວເຕີພື້ນຖານທົ່ວໄປ;
  - ແລະ ອື່ນໆ

# 3.3 ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ:

## 3.3.1 ວຽກງານຂົວທາງ:

- ເອົາໃຈໃສ່ຄຸ້ມຄອງຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງຂົວທາງໃນປະຈຸບັນ ແລະ ພິເສດ ບັນດາໂຄງການທີ່ໃກ້ຈະສຳເລັດ;
- ສືບຕໍ່ຈັດຕັ້ງປະຕິບັດບູລະນະຮັກສາຕາໜ່າງເສັ້ນທາງທົ່ວປະເທດເພື່ອຮັບປະກັນການຈໍລະຈອນ ບໍ່ໃຫ້ຕັດຂາດ ໂດຍຈະສືບຕໍ່ ປະຕິບັດການບູລະນະທາງຫລວງແຫ່ງຊາດ ຕາມແຜນປີ 2019 ແລະ ປີ 2020 ໃຫ້ສຳເລັດຕາມແຜນການທີ່ວາງໄວ້.

## 3.3.2 ວຽກງານຂົນສົ່ງ:

- ເອົາໃຈໃສ່ຂະຫຍາຍຕາໜ່າງຂົນສົ່ງໂດຍສານ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສາມາດຈໍລະຈອນໂດຍສານ ແລະ ສິນຄ້າໃຫ້ຫລາຍຂຶ້ນ.
- ສືບຕໍ່ຈັດຕັ້ງປະຕິບັດ ວຽກຄວາມປອດໄພທາງທ້ອງຖະໜົນ ເພື່ອແນໃສ່ການຫລຸດ ຜ່ອນອຸປະຕິເຫດຕາມທ້ອງຖະໜົນ ແລະ ສູ້ຊົນໃຫ້ສຳເລັດໂຄງການທົດລອງລະບົບດ່ານຊັ່ງນໍ້າຫນັກທັນສະໃຫມຢູ່ 3 ຈຸດຄື: ຢູ່ນາເຕີຍ ທາງ R3, ບ້ານແຈ້ງສະຫວ່າງ ທາງ 13 ເໜືອ ແລະ ທາງເລກ 9 ແລະ ກະກຽມສົມທົບ ຍາດແຍ່ງທຶນຈາກ ທະນາຄານພັດທະນາອາຊີ ເພື່ອໃຫ້ໄດ້ປະຕິບັດຕື່ມອີກ 6 ຈຸດ ຕາມການທາບທາມເບື້ອງຕົ້ນ.

# 3.3 ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ:

## 3.3.3 ວຽກງານ ໂຍທາທິການທາງນ້ຳ:

- ສືບຕໍ່ເອົາໃຈໃສ່ປະຕິບັດໂຄງການປ້ອງກັນນ້ຳຖ້ວມ ແລະ ບັນດາໂຄງການກໍ່ສ້າງຕະຝັ່ງເຈື່ອນທີ່ເປັນໂຄງການບູລິມະສິດຂອງຂະແໜງການ ແລະ ຂອງລັດຖະບານ;
- ສືບຕໍ່ຈັດຕັ້ງປະຕິບັດໂຄງການ ປັບປຸງ ແລະ ກໍ່ສ້າງບັນດາທ່າເຮືອ ໄດ້ຮັບອະນຸມັດໃຫ້ມີຄວາມຄືບໜ້າຕາມແຜນການທີ່ວາງໄວ້.

## 3.3.4 ວຽກງານການບິນພົນລະເຮືອນ:

- ສືບຕໍ່ປະຕິບັດໂຄງການກໍ່ສ້າງສະໜາມບິນໜອງຄ້າງ; ກະກຽມໂຄງການສຳຫຼວດ-ອອກແບບ ສະໜາມບິນສາກົນແຫ່ງໃໝ່ ຢູ່ນະຄອນຫຼວງວຽງຈັນ ໃຫ້ມີຄວາມຄືບໜ້າ
- ເອົາໃຈໃສ່ ຄົ້ນຄວ້າ ແລະ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການເຈລະຈາສະເໜີຂໍເງິນກູ້ ເພື່ອກໍ່ສ້າງໂຄງການສະໜາມບິນຊຽງຂວາງ.
- ສືບຕໍ່ເອົາໃຈໃສ່ບູລະນະສ້ອມແປງອາຄານ ແລະ ສ້ອມແປງສະໜາມບິນ ເພື່ອຮັບປະກັນທາງດ້ານຄວາມປອດໄພ. ເພື່ອປັບປຸງລະບົບການບໍລິການໃຫ້ມີຄວາມສະດວກ ແລະ ວ່ອງໄວ.

# 3.3 ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ:



## 3.3.5 ວຽກງານ ທາງລົດໄຟ:

- ສືບຕໍ່ເອົາໃຈໃສ່ໃນການຈັດຕັ້ງປະຕິບັດໂຄງການກໍ່ສ້າງທາງລົດໄຟລາວ-ໄທ ໄລຍະ2
- ສໍາລັບໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ, ຄຽງຄູ່ກັບການຊຸ້ນຊ້ຽວຈັດຕັ້ງປະຕິບັດບັນດາໜ້າວຽກກໍ່ສ້າງຕ່າງໆ, ຍັງຕ້ອງສືບຕໍ່ເອົາໃຈໃສ່ ປະຕິບັດວຽກ ເວນຄືນທີ່ດິນທີ່ຖືກຜົນກະທົບຂອງໂຄງການ ເພື່ອໃຫ້ມີຄວາມສະຫງົບ;
- ສືບຕໍ່ວຽກອ້ອມຮົ້ວ ແລະ ສ້ອມແປງເສັ້ນທາງລົດໄຟຢ່າງເປັນປົກກະຕິ ຕາມສາຍທາງລົດໄຟ ທີ່ມີຢູ່ແລ້ວ ເພື່ອໃຫ້ສາມາດນໍາໃຊ້ຢ່າງເປັນປົກກະຕິ ໃຫ້ສະດວກ ແລະ ປອດໄພ.

## 3.3.6 ວຽກງານ ເຄຫາ ແລະ ຜັງເມືອງ:

- ສືບຕໍ່ຕິດຕາມ ແລະ ກວດກາບັນດາໂຄງການກໍ່ສ້າງຫ້ອງການ ຂອງ ພະແນກ ຍທຂ ທີ່ບັນຈຸໃນແຜນລົງທຶນຂອງລັດຂອງກະຊວງ ຍທຂ ໃຫ້ມີຄວາມຄືບໜ້າ
- ໃຈໃສ່ກະກຽມຈັດຕັ້ງປະຕິບັດ ໂຄງການພັດທະນາຕົວເມືອງຕາມແລວເສດຖະກິດ GMS4; ສືບຕໍ່ປັບປຸງວິໄສທັດຮອດປີ2030 ແລະຍຸດທະສາດການພັດທະນາຕົວເມືອງໄລຍະ10 ປີ (2016-2025) ແລະແຜນການລົງທຶນ 4 ປີ(2017-2020);
- ສືບຕໍ່ຕິດຕາມ ການສະເໜີຂໍການຮັບຮອງເອົາລະບຽບການຄວບຄຸມອາຄານຂອງ ສປປ ລາວ;

# 3.3 ການພັດທະນາ ແລະ ກໍ່ສ້າງໂຄງລ່າງດ້ານ ຍທຂ:

## 3.3.7 ວຽກງານ ງານນ້ຳປະປະ ແລະ ສຸຂະພິບານ:

- ສືບຕໍ່ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ບັນດາໂຄງການ ທີ່ເປັນໂຄງການສືບຕໍ່ຈາກປີທີ່ຜ່ານມາໃຫ້ມີຄວາມຄືບໜ້າຕາມແຜນການ;

- ໃຫ້ສຳເລັດການກະກຽມຈັດຕັ້ງປະຕິບັດ ໂຄງການນ້ຳປະປາຊົນນະບົດ KFW ແລະ ໂຄງການນ້ຳປະປາ UN-HABITAT

# 3.4 ການຄຸ້ມຄອງ ແລະ ບໍລິການດ້ານ ຍທຂ:



## 3.4.1 ການບໍລິການ-ຈໍລະຈອນຂົນສົ່ງ:

- ສືບຕໍ່ອໍານວຍຄວາມສະດວກໃນວຽກງານການຂົນສົ່ງໂດຍສານແລະ ສິນຄ້າທັງພາຍໃນແລະຕ່າງປະເທດ ເພື່ອສູ້ຊົນປະຕິບັດຄາດໝາຍໃຫ້ຕົວເລກບໍລິມາດການຂົນສົ່ງທາງບົກ ເພີ່ມຂຶ້ນໃນລະດັບ 8%ຕໍ່ປີ.
- ສືບຕໍ່ເອົາໃຈໃສ່ໃນການອໍານວຍຄວາມສະດວກ ແລະ ຊຸກຍູ້ໃຫ້ການບໍລິການຂົນສົ່ງທາງນໍ້າຂະຫຍາຍຕົວ ໃນລະດັບ 7% ຕໍ່ປີ.
- ສືບຕໍ່ເອົາເອົາໃຈໃສ່ ໃນການກະກຽມ ແລະ ຈັດຕັ້ງປະຕິບັດ ໂຄງການກວດການມາດຕະຖານຄວາມປອດໄພສາກົນໃຫ້ເປັນໄປຕາມແຜນການທີ່ໄດ້ວາງໄວ້ ແນໃສ່ຮັບປະກັນ ສໍາລັບຄາດໝາຍບໍລິມາດການຂົນສົ່ງທາງອາກາດ ທີ່ໃຫ້ຂະຫຍາຍຕົວ ຢູ່ໃນລະດັບ 10-12%ຕໍ່ປີ.
- ສືບຕໍ່ຊຸກຍູ້ສົ່ງເສີມການບໍລິການການຂົນສົ່ງໂດຍສານທາງລົດໄຟ ໃຫ້ຂະຫຍາຍຕົວ 7%ຕໍ່ປີ.

## 3.4.2 ການຄຸ້ມຄອງພາຫະນະ:

- ສືບຕໍ່ ສຶກສາຄົ້ນຄ້ວາ ແລະ ຂົນຂວາຍການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາ ເພື່ອສ້າງ ແລະ ປັບປຸງລະບົບຄຸ້ມຄອງພາຫະນະ ດ້ວຍລະບົບທັນສະໄໝ.

# 3.5 ມາດຕະການຈັດຕັ້ງປະຕິບັດ:



ເພື່ອຈັດຕັ້ງປະຕິບັດແຜນວຽກຈຸດສຸມປະຈຳປີ 2019 ຂອງກະຊວງ ຍທຂ ໃຫ້ສຳເລັດຕາມທີ່ໄດ້ວາງໄວ້, ຖືກຕ້ອງກັບກົດໝາຍ ແລະ ລະບຽບການ ຈະໄດ້ເອົາໃຈໃສ່ ປະຕິບັດດັ່ງນີ້:

- ບັນດາກົມ, ກອງ, ສະຖາບັນ ແລະ ຫ້ອງການ ຄົ້ນຄວ້າຜັນຂະຫຍາຍ ແຜນວຽກຈຸດສຸມຂອງກະຊວງ ເປັນແຜນວຽກລະອຽດຂອງຕົນ ໃຫ້ຄົບຖ້ວນຊັດເຈນ.

- ໃຫ້ຄະນະພັກຄະນະນຳຂອງບັນດາ ກົມ, ກອງ, ສະຖາບັນ ແລະ ຫ້ອງການ ນຳພາຊີ້ນຳຈັດຕັ້ງປະຕິບັດ ດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງ ເພື່ອຮັບປະກັນປະສິທິພາບ, ປະສິດທິຜົນ ແລະ ມີຜົນສຳເລັດໃນການຈັດຕັ້ງປະຕິບັດ.

- ມອບໃຫ້ ບັນດາທ່ານ ຫົວໜ້າ ກົມ, ກອງ, ສະຖາບັນ ແລະ ຫ້ອງການ ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດ ແຜນວຽກຂອງຕົນ ຢ່າງເປັນປົກກະຕິ ແລະ ທັນການ ເພື່ອການສັງລວມຕີລາຄາ ໄດ້ຢ່າງແທດເໝາະກັບສະພາບການຕົວຈິງ ໃນແຕ່ລະໄລຍະ.

ກອງປະຊຸມວຽກງານ ໂຍທາທິການ ແລະ ຂົນສົ່ງ ປີ 2018
ຄັ້ງວັນທີ 28-29 ມີນາ 2019

# ຂໍຂອບໃຈ